ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 213 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 13 ສິງຫາ 2018

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການປະກັນສັງຄົມ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 095/ສພຊ, ລົງວັນທີ 27 ມິຖຸນາ 2018 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການປະກັນສັງຄົມ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 015/ຄປຈ, ລົງວັນທີ 25 ກໍລະກົດ 2018.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ການປະກັນສັງຄົມ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 54 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 27 ມິຖຸນາ 2018

# ກົດໝາຍ
# ວ່າດ້ວຍການປະກັນສັງຄົມ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການກວດກາວຽກງານປະກັນສັງຄົມ ເພື່ອໃຫ້ວຽກງານດັ່ງກ່າວເປັນລະບົບ, ເຂັ້ມແຂງ ແລະ ມີປະສິດທິພາບ ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ໃຊ້ແຮງງານ, ຜູ້ປະກັນຕົນ ແລະ ສະມາຊິກຄອບຄົວ ດ້ວຍການປະກອບທຶນສົມທົບ ແລະ ການສະໜອງການອຸດໜູນປະກັນສັງຄົມ ແນໃສ່ຄໍ້າປະກັນ ການດຳລົງຊີວິດຂັ້ນພື້ນຖານ, ການສ້າງຄວາມສາມັກຄີປອງດອງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 (ປັບປຸງ) ການປະກັນສັງຄົມ**

ການປະກັນສັງຄົມ ແມ່ນ ການຮັບປະກັນໃຫ້ຜູ້ປະກັນຕົນ ແລະ ສະມາຊິກຄອບຄົວໄດ້ຮັບການອຸດໜູນຈາກກອງທຶນປະກັນສັງຄົມ ເພື່ອຄໍ້າປະກັນພື້ນຖານການດຳລົງຊີວິດ ເມື່ອມີການປິ່ນປົວສຸຂະພາບ, ເກີດອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ, ອອກລູກ, ປ່ວຍການ, ເສຍກຳລັງແຮງງານ, ບຳນານ, ເສຍຊີວິດ, ອຸດໜູນສະມາຊິກຄອບຄົວ ແລະ ວ່າງງານ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນແຕ່ລະກໍລະນີ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ໃຊ້ແຮງງານ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ນຳໃຊ້ຜູ້ອອກແຮງງານເຮັດວຽກໃຫ້ຕົນ ໂດຍຕ້ອງຈ່າຍເງິນເດືອນ ຫຼື ຄ່າແຮງງານ ລວມທັງຜົນປະໂຫຍດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ສັນຍາແຮງງານ;

2. **ຫົວໜ່ວຍແຮງງານ** ໝາຍເຖິງ ຫົວໜ່ວຍການຜະລິດ, ທຸລະກິດ, ການຄ້າ ຫຼື ການບໍລິການ ຂອງທຸກພາກສ່ວນເສດຖະກິດ-ສັງຄົມ ທີ່ໄດ້ຂຶ້ນທະບຽນຕາມກົດໝາຍ;

3. **ພະນັກງານ-ລັດຖະກອນ** ໝາຍເຖິງ ພົນລະເມືອງລາວຜູ້ຖືກຮັບບັນຈຸໃຫ້ເຮັດວຽກ, ເລືອກຕັ້ງ ຫຼື ແຕ່ງຕັ້ງໃຫ້ດຳລົງຕຳແໜ່ງໃດໜຶ່ງ ໃນອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ທ້ອງຖິ່ນ ຫຼື ໄປປະຈຳການຢູ່ສຳນັກງານຜູ້ຕາງໜ້າສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຢູ່ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຊຶ່ງໄດ້ຮັບເງິນເດືອນ ແລະ ເງິນອຸດໜູນຈາກງົບປະມານຂອງລັດ;

4. **ຜູ້ອອກແຮງງານ** ໝາຍເຖິງ ບຸກຄົນ ທີ່ເຮັດວຽກຢູ່ພາຍໃຕ້ການຄຸ້ມຄອງດູແລຂອງຜູ້ໃຊ້ແຮງງານ ໂດຍໄດ້ຮັບການທົດແທນຈາກການອອກແຮງງານເປັນເງິນເດືອນ ຫຼື ຄ່າແຮງງານ ລວມທັງຜົນປະໂຫຍດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ສັນຍາແຮງງານ;

5. **ຜູ້ປະກອບອາຊີບສ່ວນບຸກຄົນ** ໝາຍເຖິງ ຜູ້ເຮັດວຽກໃຫ້ຕົນເອງ ໃນຂົງເຂດຕ່າງໆ ເປັນຕົ້ນ ຂົງເຂດກະສິກຳ, ອຸດສາຫະກຳ, ການຄ້າ ແລະ ການບໍລິການ;

6. **ຜູ້ສະໝັກໃຈ** ໝາຍເຖິງ ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ບຸກຄົນທົ່ວໄປທີ່ສະໝັກໃຈສົມທົບເງິນເຂົ້າກອງທຶນປະກັນສັງຄົມ;

7. **ຜູ້ປະກັນຕົນ** ໝາຍເຖິງ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ຜູ້ອອກແຮງງານທີ່ໄດ້ຮັບເງິນເດືອນ ຫຼື ຄ່າແຮງງານ ແລະ ຜູ້ສະໝັກໃຈທີ່ໄດ້ສົມທົບເງິນເຂົ້າກອງທຶນປະກັນສັງຄົມ ລວມທັງຜູ້ຮັບບຳນານ ແລະ ຜູ້ຮັບອຸດໜູນເສຍກຳລັງແຮງງານ;

8. **ໄລຍະປະກັນຕົນ** ໝາຍເຖິງ ໄລຍະເວລາທີ່ໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມ, ໄລຍະຮັບອຸດໜູນປ່ວຍການ ຫຼື ໄລຍະຮັບອຸດໜູນອອກລູກ ສຳລັບພະນັກງານ-ລັດຖະກອນ ໃຫ້ນັບແຕ່ໄລຍະບັນຈຸເຂົ້າເປັນພະນັກງານ-ລັດຖະກອນ ເປັນຕົ້ນໄປ;

9. **ສະມາຊິກຄອບຄົວ** ໝາຍເຖິງ ຜົວ, ເມຍ, ລູກ, ພໍ່ ແລະ ແມ່ຂອງຜູ້ປະກັນຕົນ;

10. **ຜູ້ດູແລ** ໝາຍເຖິງ ຜົວ, ເມຍ, ລູກ ຫຼື ບຸກຄົນອື່ນ ທີ່ເຮັດໜ້າທີ່ໃນການເບິ່ງແຍງຊ່ວຍເຫຼືອ ຜູ້ເສຍກຳລັງແຮງງານປະເພດ 1;

11. **ເງິນສົມທົບ** ໝາຍເຖິງ ເງິນທີ່ລັດຖະບານ, ຜູ້ໃຊ້ແຮງງານ, ຜູ້ປະກັນຕົນ ໄດ້ມອບເຂົ້າກອງທຶນປະກັນສັງຄົມ ເປັນລາຍເດືອນ ຕາມອັດຕາສ່ວນທີ່ໄດ້ກຳນົດໄວ້;

12. **ການເສຍກຳລັງແຮງງານ** ໝາຍເຖິງ ການຂາດ ສະມັດຖະພາບແຮງງານ ຫຼື ສະພາວະປົກກະຕິທາງຈິດ, ການສູນເສຍອະໄວຍະວະ ຫຼື ເສຍອົງຄະໃດໜຶ່ງ ຍ້ອນປະສົບອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ, ປະສົບອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ;

13. **ອຸປະຕິເຫດແຮງງານ** ໝາຍເຖິງ ການເກີດອຸປະຕິເຫດຍ້ອນການເຮັດວຽກຢູ່ໃນ ຫຼື ນອກສະຖານທີ່ເຮັດວຽກ, ເວລາເດີນທາງໄປກັບລະຫວ່າງທີ່ພັກເຊົາຫາບ່ອນເຮັດວຽກ ແລະ ໄລຍະການເຄື່ອນໄຫວທາງການ;

14. **ພະຍາດອາຊີບ** ໝາຍເຖິງ ພະຍາດທຸກຊະນິດທີ່ເກີດຈາກການປະກອບວິຊາຊີບ ຊຶ່ງພາໃຫ້ເກີດຜົນກະທົບທັງໄລຍະສັ້ນ ແລະ ໄລຍະຍາວ ຕໍ່ສຸຂະພາບຮ່າງກາຍ ແລະ ສຸຂະພາບຈິດ ຂອງຜູ້ປະກັນຕົນ;

15. **ຜູ້ເກີດສິດປິ່ນປົວສຸຂະພາບ** ໝາຍເຖິງ ຜູ້ປະກັນຕົນ, ຜົວ ຫຼື ເມຍ ແລະ ລູກ ຂອງຜູ້ປະກັນຕົນ ລວມທັງຜູ້ກຳລັງຮັບອຸດໜູນປະກັນສັງຄົມ;

16. **ຜູ້ຮັບບຳນານຄືນ** ໝາຍເຖິງ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ເຂົ້າເຮັດການປະຕິວັດ ແຕ່ປີ 1975 ຄືນຫຼັງ ຊຶ່ງໄດ້ອອກພັກການ ມີເງື່ອນໄຂຮັບອຸດໜູນບຳນານ ແຕ່ໄດ້ຮັບອຸດໜູນເທື່ອດຽວ ຫຼື ຜູ້ທີ່ການຈັດຕັ້ງຂອງພັກ, ລັດ ໃຫ້ໄປເຮັດວຽກຢູ່ລັດວິສາຫະກິດໃດໜຶ່ງ ໄດ້ອອກພັກຜ່ອນ ແຕ່ປີ 1994 ຄືນຫຼັງ ໃນເວລາທີ່ລັດວິສາຫະກິດກຸ້ມຕົນເອງ ທາງດ້ານງົບປະມານ ຫຼື ຫັນເປັນຮູບການກຳມະສິດອື່ນ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານປະກັນສັງຄົມ**

ລັດ ຊຸກຍູ້ ແລະ ສົ່ງເສີມການພັດທະນາວຽກງານປະກັນສັງຄົມ ໃຫ້ດຳເນີນໄປຄຽງຄູ່ກັບການເຕີບໂຕທາງດ້ານເສດຖະກິດ ຊຶ່ງລັດ, ຜູ້ໃຊ້ແຮງງານ ແລະ ຜູ້ປະກັນຕົນປະກອບທຶນເຂົ້າວຽກງານປະກັນສັງຄົມ ເພື່ອຮັບປະກັນການຕອບສະໜອງການອຸດໜູນປະກັນສັງຄົມພາຍໃຕ້ການຄຸ້ມຄອງຂອງລັດ ໂດຍມີການຍົກເວັ້ນອາກອນສຳລັບເງິນອຸດໜູນປະກັນສັງຄົມປະເພດຕ່າງໆ.

ລັດ ຊຸກຍູ້ ໃຫ້ພົນລະເມືອງ ເຂົ້າຮ່ວມປະກັນສັງຄົມ ເພື່ອຮັບປະກັນໃຫ້ໄດ້ຮັບການອຸດໜູນປະກັນສັງຄົມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

ລັດ ຊຸກຍູ້ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນດ້ານທຶນຮອນ ແລະ ເຕັກນິກວິຊາການ ເຂົ້າໃນການພັດທະນາວຽກງານປະກັນສັງຄົມໃຫ້ເຕີບໃຫຍ່ຂະຫຍາຍຕົວ.

**ມາດຕາ 5 (ປັບປຸງ) ຫຼັກການພື້ນຖານກ່ຽວກັບວຽກງານປະກັນສັງຄົມ**

ວຽກງານປະກັນສັງຄົມ ຕ້ອງດຳເນີນບົນຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ຍຸດທະສາດ ແລະ ຄຸ້ມຄອງ ຕາມກົດໝາຍຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

2. ຮັບປະກັນການສົມທົບທຶນເຂົ້າກອງທຶນປະກັນສັງຄົມ ຂອງລັດຖະບານ, ຜູ້ໃຊ້ແຮງງານ, ຜູ້ອອກແຮງງານ, ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ ຕາມອັດຕາສ່ວນເງິນສົມທົບທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

3. ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດໃນການອຸດໜູນປະກັນສັງຄົມ ໃຫ້ຜູ້ປະກັນຕົນ ແລະ ສະມາຊິກຄອບຄົວ;

4. ຮັບປະກັນຄວາມຍຸຕິທຳ, ໂປ່ງໃສ, ວ່ອງໄວ ແລະ ສາມາດກວດສອບໄດ້;

5. ຮັບປະກັນການສະສົມທຶນ, ສະເລ່ຍຄວາມສ່ຽງ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ມີຄວາມຍືນຍົງ;

6. ຮັບປະກັນການຄິດໄລ່ເງິນອຸດໜູນປະກັນສັງຄົມປະເພດຕ່າງໆ ໂດຍຖືເອົາເງິນປະກັນຕົນ ຫຼື ຄ່າແຮງງານຕ່ຳສຸດ ເປັນຕົວຕັ້ງ;

7. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ພັນທະຕໍ່ວຽກງານປະກັນສັງຄົມ**

ພັນທະ ຕໍ່ວຽກງານປະກັນສັງຄົມ ມີ ດັ່ງນີ້:

1. ລັດຖະບານ ມີພັນທະຈັດສັນງົບປະມານຂອງລັດ ເພື່ອສົມທົບເງິນເຂົ້າກອງທຶນປະກັນສັງຄົມ ແລະ ຄ້ຳປະກັນຄວາມຍືນຍົງຂອງກອງທຶນ;
2. ຜູ້ໃຊ້ແຮງງານ ມີພັນທະເຂົ້າຮ່ວມ ແລະ ສົມທົບເງິນເຂົ້າກອງທຶນປະກັນສັງຄົມ;
3. ຜູ້ປະກັນຕົນ ມີພັນທະຂຶ້ນທະບຽນປະກັນສັງຄົມ ແລະ ສົມທົບເງິນເຂົ້າກອງທຶນປະກັນສັງຄົມ.

**ມາດຕາ 7 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ, ພາກວິສາຫະກິດ ແລະ ຜູ້ສະໝັກໃຈ ທີ່ພົວພັນກັບການເຄື່ອນໄຫວວຽກງານປະກັນສັງຄົມ ໃນຂອບເຂດທົ່ວປະເທດ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປະກັນສັງຄົມ ດ້ວຍການຍົກລະດັບຄວາມຮູ້ທາງດ້ານວິຊາການ, ການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອພັດທະນາວຽກງານປະກັນສັງຄົມ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ປະເພດການອຸດໜູນ
## ແລະ ເປົ້າໝາຍຮັບການອຸດໜູນປະກັນສັງຄົມ

**ມາດຕາ 9 (ປັບປຸງ) ປະເພດການອຸດໜູນປະກັນສັງຄົມ**

ປະເພດການອຸດໜູນປະກັນສັງຄົມ ມີ ດັ່ງນີ້:

1. ການອຸດໜູນປະກັນສຸຂະພາບ;
2. ການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ;
3. ການອຸດໜູນອອກລູກ;

4. ການອຸດໜູນປ່ວຍການ;
5. ການອຸດໜູນເສຍກຳລັງແຮງງານ;
6. ການອຸດໜູນບຳນານ;
7. ການອຸດໜູນເສຍຊີວິດ;
8. ການອຸດໜູນສະມາຊິກຄອບຄົວ;
9. ການອຸດໜູນວ່າງງານ.

**ມາດຕາ 10 (ປັບປຸງ) ການອຸດໜູນປະກັນສຸຂະພາບ**

ການອຸດໜູນປະກັນສຸຂະພາບ ແມ່ນ ການສະໜອງເງິນອຸດໜູນ ເພື່ອຮັບປະກັນໃຫ້ຜູ້ປະກັນຕົນ ລວມທັງລູກ, ຜົວ ຫຼື ເມຍ ຂອງຜູ້ກ່ຽວ, ຜູ້ຮັບອຸດໜູນສະມາຊິກຄອບຄົວ ແລະ ຜູ້ຮັບອຸດໜູນດູແລ ໄດ້ຮັບການບໍລິການປິ່ນປົວສຸຂະພາບ ເປັນຕົ້ນ ການບໍລິການກວດ ແລະ ປິ່ງມະຕິພະຍາດ, ການປິ່ນປົວທາງການແພດ, ການຟື້ນຟູສະມັດຖະພາບຂອງຮ່າງກາຍ, ການບໍລິການໃນເວລາຖືພາ ແລະ ອອກລູກ, ການປິ່ນປົວໃນກໍລະນີໄດ້ຮັບບາດເຈັບຈາກອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ.

**ມາດຕາ 11 (ປັບປຸງ) ການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ**

ການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ແມ່ນ ການສະໜອງເງິນ ອຸດໜູນປິ່ນປົວສຸຂະພາບ, ອຸດໜູນປ່ວຍການ, ອຸດໜູນເສຍກຳລັງແຮງງານ, ອຸດໜູນເສຍຊີວິດ ແລະ ອຸດໜູນສະມາຊິກຄອບຄົວ ໃນກໍລະນີ ເກີດອຸປະຕິເຫດແຮງງານ ຫຼື ເປັນພະຍາດອາຊີບ.

**ມາດຕາ 12 (ປັບປຸງ) ການອຸດໜູນອອກລູກ**

ການອຸດໜູນອອກລູກ ແມ່ນ ການສະໜອງເງິນອຸດໜູນໃຫ້ແກ່ການອອກລູກ, ການຫຼຸລູກ, ລູກຕາຍໃນທ້ອງ ຫຼື ການເອົາເດັກນ້ອຍເກີດໃໝ່ທີ່ມີອາຍຸ ສາມເດືອນລົງມາ ເປັນລູກລ້ຽງ.

ການອຸດໜູນອອກລູກ ປະກອບດ້ວຍ ເງິນບຳເນັດອອກລູກ ຊຶ່ງຈ່າຍໃຫ້ເທື່ອດຽວຕໍ່ການອອກລູກແຕ່ລະຄັ້ງ ແລະ ເງິນອຸດໜູນອອກລູກ ຊຶ່ງຈ່າຍເປັນລາຍເດືອນເປັນເງິນທົດແທນລາຍໄດ້ໃຫ້ແກ່ຜູ້ປະກັນຕົນເພດຍິງພາກວິສາຫະກິດ ໃນເວລາພັກອອກລູກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 13 (ປັບປຸງ) ການອຸດໜູນປ່ວຍການ**

ການອຸດໜູນປ່ວຍການ ແມ່ນ ການສະໜອງເງິນທົດແທນລາຍໄດ້ໃຫ້ແກ່ຜູ້ປະກັນຕົນທີ່ຖືກຢຸດຈ່າຍເງິນເດືອນຊົ່ວຄາວໃນເວລາປິ່ນປົວ ແລະ ຟື້ນຟູສຸຂະພາບ ອັນເນື່ອງມາຈາກປະສົບອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ, ປະສົບອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ, ການອອກລູກ, ຫຼຸລູກ ຫຼື ລູກຕາຍໃນທ້ອງ.

**ມາດຕາ 14 (ໃໝ່) ການອຸດໜູນເສຍກຳລັງແຮງງານ**

ການອຸດໜູນເສຍກຳລັງແຮງງານ ແມ່ນ ການສະໜອງເງິນອຸດໜູນໃຫ້ຜູ້ປະກັນຕົນທີ່ຂາດ ສະມັດຖະພາບແຮງງານ ຫຼື ສະພາວະປົກກະຕິທາງຈິດໃຈ, ການສູນເສຍອະໄວຍະວະ ຫຼື ເສຍອົງຄະໃດໜຶ່ງຍ້ອນປະສົບອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ, ປະສົບອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ.

**ມາດຕາ 15 (ປັບປຸງ) ການອຸດໜູນບຳນານ**

ການອຸດໜູນບຳນານ ແມ່ນ ການສະໜອງເງິນອຸດໜູນເປັນລາຍເດືອນ ໃຫ້ຜູ້ປະກັນຕົນທີ່ຄົບເງື່ອນໄຂພັກຮັບບຳນານ, ສຳລັບຜູ້ບໍ່ຄົບເງື່ອນໄຂຮັບອຸດໜູນບຳນານ ຈະໄດ້ຮັບເງິນອຸດໜູນເທື່ອດຽວ.

**ມາດຕາ 16 (ປັບປຸງ) ການອຸດໜູນເສຍຊີວິດ**

ການອຸດໜູນເສຍຊີວິດ ແມ່ນ ການສະໜອງເງິນອຸດໜູນ ເພື່ອເປັນການແບ່ງເບົາພາລະໃຊ້ຈ່າຍໃນການຈັດພິທີຊາປານະກິດສົບ ໃຫ້ແກ່ຜູ້ປະກັນຕົນ, ຜູ້ຮັບອຸດໜູນບຳນານ, ຜູ້ຮັບອຸດໜູນເສຍກຳລັງແຮງງານ ແລະ ສະມາຊິກຄອບຄົວ ລວມທັງຜູ້ຮັບອຸດໜູນສະມາຊິກຄອບຄົວ ແລະ ຜູ້ຮັບອຸດໜູນດູແລ ທີ່ໄດ້ເສຍຊີວິດ.

**ມາດຕາ 17 ການອຸດໜູນສະມາຊິກຄອບຄົວ**

ການອຸດໜູນສະມາຊິກຄອບຄົວ ແມ່ນ ການສະໜອງເງິນອຸດໜູນເປັນລາຍເດືອນໃຫ້ຜົວ ຫຼື ເມຍ, ລູກ, ພໍ່ ແລະ ແມ່ ຂອງຜູ້ປະກັນຕົນ ທີ່ໄດ້ເສຍຊີວິດ.

**ມາດຕາ 18 (ປັບປຸງ) ການອຸດໜູນວ່າງງານ**

ການອຸດໜູນວ່າງງານ ແມ່ນ ການສະໜອງເງິນອຸດໜູນ ເພື່ອທົດແທນລາຍໄດ້ເປັນລາຍເດືອນໃຫ້ຜູ້ປະກັນຕົນໃນເວລາວ່າງງານ ເປັນແຕ່ລະໄລຍະ.

**ມາດຕາ 19 (ປັບປຸງ) ເປົ້າໝາຍຮັບການອຸດໜູນປະກັນສັງຄົມ**

ເປົ້າໝາຍຮັບການອຸດໜູນປະກັນສັງຄົມ ຂອງແຕ່ລະກໍລະນີ ມີ ດັ່ງນີ້:

1. ພະນັກງານ-ລັດຖະກອນ, ທະຫານ ແລະ ຕຳຫຼວດ ໄດ້ຮັບການອຸດໜູນປະກັນສັງຄົມ ຕາມທີ່ໄດ້ກຳນົດໄວ້ໃນພາກທີ III ຂອງກົດໝາຍສະບັບນີ້;

2. ຜູ້ອອກແຮງງານ ໃນຫົວໜ່ວຍແຮງງານ ໄດ້ຮັບການອຸດໜູນປະກັນສັງຄົມ ຕາມທີ່ໄດ້ກຳນົດໄວ້ໃນພາກທີ IV ຂອງກົດໝາຍສະບັບນີ້;

3. ຜູ້ສະໝັກໃຈ ໄດ້ຮັບການອຸດໜູນປະກັນສັງຄົມ ຕາມທີ່ໄດ້ກຳນົດໄວ້ໃນພາກທີ IV ຂອງກົດໝາຍສະບັບນີ້ ຍົກເວັ້ນການອຸດໜູນ ອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ແລະ ວ່າງງານ;

4. ຜົວ ຫຼື ເມຍ ແລະ ລູກ ຂອງຜູ້ປະກັນຕົນ ໄດ້ຮັບການອຸດໜູນປິ່ນປົວສຸຂະພາບ, ເສຍຊີວິດ ຫຼື ການອຸດໜູນສະມາຊິກຄອບຄົວ;

5. ພໍ່ ແລະ ແມ່ ຂອງຜູ້ປະກັນຕົນ ໄດ້ຮັບການອຸດໜູນສະມາຊິກຄອບຄົວ;

6. ຜູ້ດູແລ ຜູ້ເສຍກຳລັງແຮງງານ ໄດ້ຮັບການອຸດໜູນ ປະກັນສຸຂະພາບ ແລະ ເສຍຊີວິດ.

## ພາກທີ III
## ການອຸດໜູນປະກັນສັງຄົມພາກລັດ
### ໝວດທີ 1
### ການອຸດໜູນປະກັນສຸຂະພາບ

**ມາດຕາ 20 (ປັບປຸງ) ເງື່ອນໄຂຮັບການອຸດໜູນປະກັນສຸຂະພາບ**

ຜູ້ທີ່ຮັບການອຸດໜູນປະກັນສຸຂະພາບ ມີເງື່ອນໄຂ ດັ່ງນີ້:

1. ໄດ້ບັນຈຸເຂົ້າເປັນພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ;

2. ຜົວ ຫຼື ເມຍ ທີ່ບໍ່ແມ່ນຜູ້ປະກັນຕົນ ແລະ ລູກ ຂອງຜູ້ກ່ຽວທີ່ມີອາຍຸບໍ່ເກີນສິບແປດປີ ຫຼື ຍັງສືບຕໍ່ສຶກສາຮ່ຳຮຽນ ທີ່ຍັງບໍ່ທັນໄດ້ແຕ່ງດອງ ຫຼື ຜູ້ທີ່ໄດ້ແຕ່ງດອງແລ້ວ ແຕ່ຄູ່ສົມລົດບໍ່ແມ່ນຜູ້ປະກັນຕົນ ຊຶ່ງມີອາຍຸບໍ່ເກີນ ຊາວສາມປີ.

ໃນກໍລະນີຜູ້ປະກັນຕົນຫາກເສຍຊີວິດ ຜົວ ຫຼື ເມຍ ແລະ ລູກ ຂອງຜູ້ກ່ຽວ ຮັບການອຸດໜູນປິ່ນປົວສຸຂະພາບ ພາຍໃນເວລາ ສາມເດືອນ ນັບແຕ່ຜູ້ປະກັນຕົນໄດ້ເສຍຊີວິດ ເປັນຕົ້ນໄປ.

**ມາດຕາ 21 (ປັບປຸງ) ການຄິດໄລ່ເງິນອຸດໜູນປະກັນສຸຂະພາບ**

ການຄິດໄລ່ເງິນ ແລະ ການຈັດຕັ້ງປະຕິບັດ ການອຸດໜູນປະກັນສຸຂະພາບ ໄດ້ກຳນົດໄວ້ໃນກົດໝາຍ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ.

### ໝວດທີ 2
### ການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ

**ມາດຕາ 22 (ປັບປຸງ) ເງື່ອນໄຂຮັບການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ**

ຜູ້ທີ່ຮັບການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ມີເງື່ອນໄຂ ດັ່ງນີ້:

1. ໄດ້ບັນຈຸເຂົ້າເປັນພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ;

2. ໄດ້ພັກວຽກເພື່ອປິ່ນປົວ ຫຼື ຟື້ນຟູສຸຂະພາບ, ຂາດສະມັດຖະພາບແຮງງານ ແລະ ສະພາວະປົກກະຕິທາງຈິດໃຈ, ສູນເສຍອະໄວຍະວະ, ເສຍອົງຄະໃດໜຶ່ງຂອງຮ່າງກາຍ ຫຼື ເສຍຊີວິດ ຍ້ອນປະສົບອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ.

ໃນກໍລະນີ ມີເຈດຕະນາເຮັດໃຫ້ເກີດອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ຈະບໍ່ຖືເປັນເງື່ອນໄຂຮັບການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ.

**ມາດຕາ 23 (ໃໝ່) ປະເພດ ແລະ ການຄິດໄລ່ການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ**

ປະເພດ ແລະ ການຄິດໄລ່ການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ໃຫ້ປະຕິບັດຕາມແຕ່ລະປະເພດ ເຊັ່ນ ການອຸດໜູນປ່ວຍການ, ການອຸດໜູນເສຍກຳລັງແຮງງານ, ການອຸດໜູນເສຍຊີວິດ ແລະ

ການອຸດໜູນສະມາຊິກຄອບຄົວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27, 29, 30, 31, 32, 33, 40 ແລະ ມາດຕາ 42 ຂອງກົດໝາຍສະບັບນີ້.

## ໝວດທີ 3
## ການອຸດໜູນອອກລູກ

**ມາດຕາ 24 (ປັບປຸງ) ເງື່ອນໄຂຮັບການອຸດໜູນອອກລູກ**

ພະນັກງານ-ລັດຖະກອນ, ທະຫານ ແລະ ຕຳຫຼວດ ທີ່ເປັນເພດຍິງ ຫຼື ເມຍ ຂອງພະນັກງານ-ລັດຖະກອນ, ທະຫານ ແລະ ຕຳຫຼວດ ທີ່ບໍ່ແມ່ນຜູ້ປະກັນຕົນ ຊຶ່ງຖືພາແຕ່ ສອງເດືອນ ຂຶ້ນໄປ ຈະໄດ້ຮັບເງິນບຳເນັດອອກລູກ ແລະ ເງິນເດືອນປົກກະຕິ ໃນກໍລະນີ ອອກລູກ, ຫຼຸລູກ ຫຼື ລູກຕາຍໃນທ້ອງໂດຍມີການຢັ້ງຢືນການແພດ.

ສຳລັບການຫຼຸລູກ ຫຼື ເອົາລູກອອກ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະບໍ່ໄດ້ຮັບເງິນອຸດໜູນດັ່ງກ່າວນີ້.

**ມາດຕາ 25 (ປັບປຸງ) ການຄິດໄລ່ເງິນອຸດໜູນອອກລູກ**

ໃນໄລຍະພັກວຽກຍ້ອນການອອກລູກ ຫຼື ຫຼຸລູກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ນອກຈາກໄດ້ຮັບເງິນເດືອນປົກກະຕິແລ້ວ ຍັງໄດ້ຮັບເງິນບຳເນັດອອກລູກໂດຍຄິດໄລ່ເທົ່າກັບ ຫົກສິບ ສ່ວນຮ້ອຍ (60%) ຂອງເງິນເດືອນສຸດທ້າຍ ຕໍ່ລູກໜຶ່ງຄົນ.

## ໝວດທີ 4
## ການອຸດໜູນປ່ວຍການ

**ມາດຕາ 26 (ປັບປຸງ) ເງື່ອນໄຂຮັບການອຸດໜູນປ່ວຍການ**

ຜູ້ທີ່ຮັບການອຸດໜູນປ່ວຍການ ມີເງື່ອນໄຂ ດັ່ງນີ້:

1. ມີໃບຢຸດຈ່າຍເງິນເດືອນຊົ່ວຄາວຈາກການຈັດຕັ້ງທີ່ກ່ຽວຂ້ອງ. ສຳລັບພະນັກງານ-ລັດຖະກອນ ຍັງຕ້ອງມີການຢັ້ງຢືນຈາກຂະແໜງການພາຍໃນ;
2. ມີການຢັ້ງຢືນການແພດ.

**ມາດຕາ 27 (ປັບປຸງ) ການຄິດໄລ່ເງິນອຸດໜູນປ່ວຍການ**

ເງິນອຸດໜູນປ່ວຍການໃຫ້ຄິດໄລ່ ເທົ່າກັບ ເຈັດສິບ ສ່ວນຮ້ອຍ (70%) ຂອງເງິນປະກັນຕົນເດືອນສຸດທ້າຍຂອງຜູ້ກ່ຽວ ບໍ່ເກີນຫົກເດືອນເປັນໄລຍະທຳອິດ. ຖ້າຜູ້ກ່ຽວຍັງສືບຕໍ່ພັກວຽກເພື່ອປິ່ນປົວ ຫຼື ຟື້ນຟູສຸຂະພາບກໍຈະໄດ້ຮັບ ຫົກສິບ ສ່ວນຮ້ອຍ (60%) ບໍ່ເກີນ ຫົກເດືອນ ເປັນໄລຍະສຸດທ້າຍ.

ໃນກໍລະນີ ສຸຂະພາບຂອງຜູ້ກ່ຽວ ຫາກຍັງບໍ່ດີຂຶ້ນ ຕ້ອງໄດ້ກວດ ແລະ ປະເມີນສຸຂະພາບຄືນໂດຍມີການຢັ້ງຢືນດ້ານການແພດ ເພື່ອຮັບການອຸດໜູນເສຍກຳລັງແຮງງານ.

## ໝວດທີ 5
## ການອຸດໜູນເສຍກຳລັງແຮງງານ

**ມາດຕາ 28 (ໃໝ່) ເງື່ອນໄຂຮັບການອຸດໜູນເສຍກຳລັງແຮງງານ**

ຜູ້ທີ່ຮັບການອຸດໜູນເສຍກຳລັງແຮງງານ ມີເງື່ອນໄຂ ດັ່ງນີ້:

1. ຂາດສະມັດຖະພາບແຮງງານ ຫຼື ສະພາວະປົກກະຕິທາງຈິດ, ເສຍອົງຄະ ຫຼື ອະໄວຍະວະໃດໜຶ່ງຂອງຮ່າງກາຍ ຍ້ອນປະສົບອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ, ອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ;

2. ມີໜັງສືຢັ້ງຢືນ ການຕີລາຄາຈັດປະເພດ ແລະ ລະດັບການເສຍກຳລັງແຮງງານ ຕາມລະບຽບການທີ່ກ່ຽວຂ້ອງ.

ສຳລັບການເສຍອົງຄະ ກ່ອນເປັນພະນັກງານ-ລັດຖະກອນ, ທະຫານ ຫຼື ຕຳຫຼວດ ຈະບໍ່ຖືເປັນງື່ອນໄຂຮັບການອຸດໜູນເສຍກຳລັງແຮງງານ.

**ມາດຕາ 29 (ປັບປຸງ) ປະເພດ ແລະ ລະດັບການເສຍກຳລັງແຮງງານ**

ປະເພດ ແລະ ລະດັບການເສຍກຳລັງແຮງງານ ໄດ້ກຳນົດ ດັ່ງນີ້:

1. ປະເພດທີ ໜຶ່ງ ມີລະດັບການເສຍກຳລັງແຮງງານແຕ່ ແປດສິບເອັດ ສ່ວນຮ້ອຍ (81%) ຫາ ໜຶ່ງຮ້ອຍ ສ່ວນຮ້ອຍ (100%);

2. ປະເພດທີ ສອງ ມີລະດັບການເສຍກຳລັງແຮງງານແຕ່ ເຈັດສິບເອັດ ສ່ວນຮ້ອຍ (71%) ຫາ ແປດສິບ ສ່ວນຮ້ອຍ (80%);

3. ປະເພດທີ ສາມ ມີລະດັບການເສຍກຳລັງແຮງງານແຕ່ ຫົກສິບເອັດ ສ່ວນຮ້ອຍ (61%) ຫາ ເຈັດສິບ ສ່ວນຮ້ອຍ (70%);

4. ປະເພດທີ ສີ່ ມີລະດັບການເສຍກຳລັງແຮງງານແຕ່ ຫ້າສິບເອັດ ສ່ວນຮ້ອຍ (51%) ຫາ ຫົກສິບ ສ່ວນຮ້ອຍ (60%);

5. ປະເພດທີ ຫ້າ ມີລະດັບການເສຍກຳລັງແຮງງານແຕ່ ສີ່ສິບເອັດ ສ່ວນຮ້ອຍ (41%) ຫາ ຫ້າສິບ ສ່ວນຮ້ອຍ (50%);

6. ປະເພດທີ ຫົກ ມີລະດັບການເສຍກຳລັງແຮງງານແຕ່ ສິບຫ້າ ສ່ວນຮ້ອຍ (15%) ຫາ ສີ່ສິບ ສ່ວນຮ້ອຍ (40%).

ສຳລັບຜູ້ມີລະດັບການເສຍກຳລັງແຮງງານແຕ່ ໜຶ່ງ ສ່ວນຮ້ອຍ (1%) ຫາ ສິບສີ່ ສ່ວນຮ້ອຍ (14%) ຈະບໍ່ຢູ່ໃນເງື່ອນໄຂຮັບການອຸດໜູນເສຍກຳລັງແຮງງານ.

ລະດັບການເສຍກຳລັງແຮງງານ ນັບແຕ່ປະເພດທີໜຶ່ງ ຫາ ປະເພດທີຫ້າ ຈະໄດ້ຮັບເງິນອຸດໜູນເສຍກຳລັງແຮງງານ ເປັນລາຍເດືອນ, ສ່ວນປະເພດທີຫົກ ຈະໄດ້ຮັບເງິນອຸດໜູນເສຍກຳລັງແຮງງານເທື່ອດຽວ.

ການຕີລາຄາຈັດປະເພດ ແລະ ລະດັບການເສຍກຳລັງແຮງງານ ໃຫ້ປະຕິບັດຕາມປຶ້ມຄູ່ມືການແບ່ງຂັ້ນຂາດສະມັດຖະພາບແຮງງານ ຂອງຄົນເຈັບ-ພິການ ທີ່ກະຊວງສາທາລະນະສຸກ ກຳນົດ.

ໃນກໍລະນີມີເຫດຜົນທີ່ຈຳເປັນໃຫ້ນຳເອົາຜົນການຕີລາຄາຈັດ ປະເພດ ແລະ ລະດັບການເສຍກຳລັງແຮງງານສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາ.

**ມາດຕາ 30 (ປັບປຸງ) ການຄິດໄລ່ເງິນອຸດໜູນເສຍກຳລັງແຮງງານລາຍເດືອນ**

ການຄິດໄລ່ເງິນອຸດໜູນເສຍກຳລັງແຮງງານລາຍເດືອນ ໃຫ້ຄິດໄລ່ໂດຍເອົາເງິນປະກັນຕົນເດືອນສຸດທ້າຍ ຂອງຜູ້ກ່ຽວກ່ອນເສຍກຳລັງແຮງງານ ຄູນ ກັບລະດັບສ່ວນຮ້ອຍຂອງເງິນອຸດໜູນເສຍກຳລັງແຮງງານຕາມແຕ່ລະປະເພດ ດັ່ງນີ້:

1. ປະເພດທີໜຶ່ງ ເທົ່າກັບ ແປດສິບ ສ່ວນຮ້ອຍ (80%);
2. ປະເພດທີສອງ ເທົ່າກັບ ເຈັດສິບ ສ່ວນຮ້ອຍ (70%);
3. ປະເພດທີສາມ ເທົ່າກັບ ຫົກສິບ ສ່ວນຮ້ອຍ (60%);
4. ປະເພດທີສີ່ ເທົ່າກັບ ຫ້າສິບ ສ່ວນຮ້ອຍ (50%);
5. ປະເພດທີຫ້າ ເທົ່າກັບ ສີ່ສິບ ສ່ວນຮ້ອຍ (40%).

ການຄິດໄລ່ເງິນອຸດໜູນເສຍກຳລັງແຮງງານໃຫ້ຄິດໄລ່ເທົ່າກັບ ໜຶ່ງຮ້ອຍ ສ່ວນຮ້ອຍ (100%) ສຳລັບຜູ້ເສຍກຳລັງແຮງງານຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ແລະ ແປດສິບ ສ່ວນຮ້ອຍ (80%) ສຳລັບຜູ້ເສຍກຳລັງແຮງງານຍ້ອນອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ ຂອງລະດັບສ່ວນຮ້ອຍເງິນອຸດໜູນເສຍກຳລັງແຮງງານແຕ່ລະປະເພດ. ຖ້າຜູ້ເສຍກຳລັງແຮງງານຫາກຍັງເຮັດວຽກມີເງິນເດືອນ ເງິນອຸດໜູນເສຍກຳລັງແຮງງານຈະໄດ້ເທົ່າກັບ ຫ້າສິບ ສ່ວນຮ້ອຍ (50%) ແລະ ຖ້າເຂົ້າຮັບບຳນານຈະໄດ້ຮັບ ຊາວຫ້າ ສ່ວນຮ້ອຍ (25%) ຂອງເງິນອຸດໜູນເສຍກຳລັງແຮງງານຂອງຜູ້ກ່ຽວ.

ຜູ້ປະກັນຕົນ ທີ່ໄດ້ຮັບເງິນອຸດໜູນເສຍກຳລັງແຮງງານມາກ່ອນ ຫາກໄດ້ຮັບເງິນອຸດໜູນບຳເນັດອອກການເທື່ອດຽວແລ້ວ ຈະໄດ້ຮັບເງິນອຸດໜູນເສຍກຳລັງແຮງງານ ເທົ່າກັບອັດຕາສ່ວນຮ້ອຍເງິນອຸດໜູນເສຍກຳລັງແຮງງານຂອງຜູ້ຮັບອຸດໜູນບຳນານ ໄປຕະຫຼອດຊີວິດ.

ໃນກໍລະນີ ການເສຍກຳລັງແຮງງານ ຫາກມີການຊຸດໂຊມລົງ ຫຼື ມີການສູນເສຍເພີ່ມໃໝ່ ຕ້ອງໄດ້ຮັບການຕີລາຄາຈັດປະເພດ ແລະ ລະດັບການເສຍກຳລັງແຮງງານຄືນໃໝ່.

ສຳລັບລະດັບສ່ວນຮ້ອຍ ຂອງເງິນອຸດໜູນເສຍກຳລັງແຮງງານຂອງຜູ້ຮັບອຸດໜູນເສຍກຳລັງແຮງງານລາຍເດືອນ ກ່ອນກົດໝາຍສະບັບນີ້ ມີຜົນໃຊ້ບັງຄັບນັ້ນ ແມ່ນບໍ່ມີການປ່ຽນແປງ.

**ມາດຕາ 31 (ປັບປຸງ) ການປະກອບອຸປະກອນ ຫຼື ອົງຄະທຽມໃຫ້ຜູ້ຮັບອຸດໜູນເສຍກຳລັງແຮງງານ**

ຜູ້ຮັບອຸດໜູນເສຍກຳລັງແຮງງານລາຍເດືອນ ທີ່ມີຜົນກະທົບຕໍ່ການເຄື່ອນໄຫວວຽກງານ ແລະ ການດຳລົງຊີວິດ ຈະໄດ້ຮັບການປະກອບອຸປະກອນ ຫຼື ອົງຄະທຽມຕາມທີ່ລັດສະໜອງໃຫ້. ໃນກໍລະນີມີການໃຊ້ຈ່າຍສຳລັບອຸປະກອນ ຫຼື ອົງຄະທຽມນັ້ນ ໃຫ້ນຳໃຊ້ເງິນກອງທຶນປະກັນສັງຄົມ.

**ມາດຕາ 32 (ປັບປຸງ) ການອຸດໜູນຜູ້ດູແລ**

ການອຸດໜູນຜູ້ດູແລ ແມ່ນ ການສະໜອງເງິນອຸດໜູນ ໃຫ້ຜູ້ດູແລ ຜູ້ເສຍກຳລັງແຮງງານປະເພດໜຶ່ງ ເທົ່ານັ້ນ ຊຶ່ງຜູ້ດູແລ ຈະໄດ້ຮັບເງິນອຸດໜູນດູແລ ເທົ່າກັບເງິນເດືອນລັດຖະບໍລິຫານຊັ້ນ 1 ຂັ້ນ 5 ຈົນກວ່າຜູ້ເສຍກຳລັງແຮງງານຈະເສຍຊີວິດ.

ສຳລັບຜູ້ຮັບເງິນອຸດໜູນຜູ້ດູແລກ່ອນກົດໝາຍສະບັບນີ້ ມີຜົນໃຊ້ບັງຄັບນັ້ນບໍ່ມີການປ່ຽນແປງ.

**ມາດຕາ 33 (ປັບປຸງ) ການຄິດໄລ່ເງິນອຸດໜູນເສຍກຳລັງແຮງງານ ເທື່ອດຽວ**

ເງິນອຸດໜູນເສຍກຳລັງແຮງງານເທື່ອດຽວ ໃຫ້ຄິດໄລ່ ດັ່ງນີ້:

1. ຜູ້ເສຍກຳລັງແຮງງານຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ໄດ້ຮັບເງິນອຸດໜູນເສຍກຳລັງແຮງງານເທື່ອດຽວ ເທົ່າກັບລະດັບການເສຍກຳລັງແຮງງານ ຄູນ ສິບສອງເດືອນ ຂອງເງິນປະກັນຕົນເດືອນສຸດທ້າຍຂອງຜູ້ກ່ຽວ;

2. ຜູ້ເສຍກຳລັງແຮງງານ ຍ້ອນອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ ໄດ້ຮັບເງິນອຸດໜູນເສຍກຳລັງແຮງງານເທື່ອດຽວ ເທົ່າກັບລະດັບການເສຍກຳລັງແຮງງານ ຄູນ ສິບເດືອນ ຂອງເງິນປະກັນຕົນເດືອນສຸດທ້າຍຂອງຜູ້ກ່ຽວ.

## ໝວດທີ 6
## ການອຸດໜູນບຳນານ

**ມາດຕາ 34 (ປັບປຸງ) ເງື່ອນໄຂຮັບການອຸດໜູນບຳນານ**

ຜູ້ທີ່ຮັບການອຸດໜູນບຳນານ ມີເງື່ອນໄຂ ດັ່ງນີ້:

1. ມີອາຍຸກະສຽນ ຫົກສິບປີ ແລະ ມີປີການ ຊາວຫ້າປີ ຂຶ້ນໄປ, ສຳລັບເພດຍິງຈະສະໝັກໃຈອອກຮັບການອຸດໜູນບຳນານກ່ອນກໍໄດ້ ແຕ່ອາຍຸກະສຽນ ບໍ່ໃຫ້ຫຼຸດ ຫ້າສິບຫ້າປີ. ສຳລັບ ຜູ້ມີປີການ ສາມສິບປີຂຶ້ນໄປ ແຕ່ອາຍຸກະສຽນບໍ່ຄົບເງື່ອນໄຂ ສາມປີລົງມາ ຫຼື ຜູ້ມີອາຍຸກະສຽນເກີນ ຫົກສິບປີ ແຕ່ປີການຍັງ ສອງປີລົງມາ ສາມາດຮັບອຸດໜູນບຳນານໄດ້ ແຕ່ອາຍຸກະສຽນ ຫຼື ປີການຫຼຸດໜຶ່ງປີໃດ ໃຫ້ຫຼຸດອັດຕາສ່ວນອຸດໜູນບຳນານລົງ ໜຶ່ງ ສ່ວນຮ້ອຍ (1%);

ສຳລັບອາຍຸກະສຽນ ແລະ ປີການຂອງທະຫານ, ຕຳຫຼວດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ.

2. ເຂົ້າການປະຕິວັດກ່ອນປີ 1975, ເສຍກຳລັງແຮງງານປະເພດ ໜຶ່ງ ຫາ ສີ່, ເຮັດວຽກກັບທາດເບື່ອ, ເຄມີ ແລະ ສານພິດທີ່ເປັນອັນຕະລາຍຕໍ່ສຸຂະພາບແຕ່ ຫ້າປີຂຶ້ນໄປ ຕາມການຢັ້ງຢືນທາງການແພດ, ມີອາຍຸກະສຽນຫ້າສິບຫ້າປີ ຂຶ້ນໄປ ສຳລັບເພດຊາຍ, ຫ້າສິບປີ ຂຶ້ນໄປ ສຳລັບເພດຍິງ ແລະ ມີປີການແຕ່ ຊາວປີ ຂຶ້ນໄປ ແລະ ໃຫ້ຈັດເຂົ້າຢູ່ໃນກຸ່ມຜູ້ຮັບບຳນານ ໄລຍະທີສາມ;

3. ເຮັດວຽກໃນລະບອບເກົ່າກ່ອນປີ 1975 ໃຫ້ຄິດໄລ່ປີການ ສາມປີໃດ ເທົ່າກັບ ໜຶ່ງປີການ ແລະ ໃຫ້ຈັດເຂົ້າເປັນ ໄລຍະທີສອງ;

4. ມີການຢັ້ງຢືນພັກຮັບບຳນານຢ່າງຖືກຕ້ອງຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 35 (ປັບປຸງ) ການກຳນົດອັດຕາສ່ວນຮ້ອຍອຸດໜູນບຳນານ**

ການກຳນົດອັດຕາສ່ວນຮ້ອຍອຸດໜູນບຳນານ ມີ ສີ່ ໄລຍະ ດັ່ງນີ້:

1. ຜູ້ເຮັດການປະຕິວັດ ແຕ່ປີ 1954 ຄືນຫຼັງ ໃຫ້ຈັດເຂົ້າເປັນ ໄລຍະທີໜຶ່ງ ຊຶ່ງໄດ້ຮັບອຸດໜູນບຳນານ ໂດຍເລີ່ມແຕ່ ແປດສິບ ສ່ວນຮ້ອຍ (80%) ຫາ ໜຶ່ງຮ້ອຍ ສ່ວນຮ້ອຍ (100%);

2. ຜູ້ເຮັດການປະຕິວັດ ແຕ່ປີ 1955 ຫາ ປີ 1974 ໃຫ້ຈັດເຂົ້າເປັນ ໄລຍະທີສອງ ຊຶ່ງໄດ້ຮັບອຸດໜູນບຳນານ ໂດຍເລີ່ມແຕ່ ເຈັດສິບຫ້າ ສ່ວນຮ້ອຍ (75%) ຫາ ເກົ້າສິບ ສ່ວນຮ້ອຍ (90%);

3. ຜູ້ເຮັດການປະຕິວັດ ແຕ່ປີ 1975 ເປັນຕົ້ນມາ ໃຫ້ຈັດເຂົ້າເປັນ ໄລຍະທີສາມ ຊຶ່ງໄດ້ຮັບອຸດໜູນບໍານານໂດຍເລີ່ມແຕ່ ເຈັດສິບ ສ່ວນຮ້ອຍ (70%) ຫາ ແປດສິບຫ້າ ສ່ວນຮ້ອຍ (85%);

4. ຜູ້ສັງກັດລັດ ນັບແຕ່ ວັນທີ 1 ມັງກອນ 2018 ເປັນຕົ້ນໄປ ໃຫ້ຈັດເຂົ້າເປັນ ໄລຍະທີສີ່ ຊຶ່ງໄດ້ຮັບອຸດໜູນບໍານານ ໂດຍເລີ່ມແຕ່ ຫົກສິບ ສ່ວນຮ້ອຍ (60%) ຫາ ເຈັດສິບຫ້າ ສ່ວນຮ້ອຍ (75%).

ອັດຕາສ່ວນຮ້ອຍອຸດໜູນບໍານານໃຫ້ເອົາປີການຕໍ່າສຸດຂອງຜູ້ກ່ຽວທຽບກັບອັດຕາສ່ວນຮ້ອຍອຸດໜູນບໍານານຕໍ່າສຸດຕາມ ສີ່ ໄລຍະເທິງນີ້ ເປັນຈຸດເລີ່ມ, ຖ້າປີການຫາກເກີນໜຶ່ງປີໃດ ໃຫ້ເພີ່ມຂຶ້ນ ໜຶ່ງ ສ່ວນຮ້ອຍ (1%) ຕໍ່ປີ ແຕ່ບໍ່ໃຫ້ເກີນເພດານອັດຕາສ່ວນຮ້ອຍສູງສຸດ ຂອງແຕ່ລະໄລຍະ.

**ມາດຕາ 36 (ໃໝ່) ການຄິດໄລ່ເງິນອຸດໜູນບໍານານ**

ການຄິດໄລ່ເງິນອຸດໜູນບໍານານ ໃຫ້ເອົາອັດຕາສ່ວນຮ້ອຍອຸດໜູນບໍານານ ຄູນ ເງິນປະກັນຕົນເດືອນສຸດທ້າຍຂອງຜູ້ກ່ຽວ.

**ມາດຕາ 37 (ປັບປຸງ) ການດັດປັບເງິນອຸດໜູນບໍານານ**

ການດັດປັບເງິນອຸດໜູນບໍານານ ໃຫ້ປະຕິບັດຕາມການດັດປັບມູນຄ່າດັດສະນີເງິນເດືອນຂອງພະນັກງານ-ລັດຖະກອນ ໃນແຕ່ລະໄລຍະ.

**ມາດຕາ 38 (ປັບປຸງ) ການຄິດໄລ່ເງິນອຸດໜູນເທື່ອດຽວ**

ຜູ້ບໍ່ຄົບເງື່ອນໄຂຮັບການອຸດໜູນບໍານານ ຈະໄດ້ຮັບເງິນອຸດໜູນເທື່ອດຽວຊຶ່ງເທົ່າກັບ ໜຶ່ງເດືອນເຄິ່ງຂອງເງິນປະກັນຕົນ ເດືອນສຸດທ້າຍ ຄູນຈໍານວນປີການ ຂອງຜູ້ກ່ຽວ.

ສໍາລັບ ຜູ້ຄົບເງື່ອນໄຂຮັບການອຸດໜູນບໍານານ ຈະບໍ່ອະນຸຍາດໃຫ້ຮັບການອຸດໜູນດັ່ງກ່າວ.

## ໝວດທີ 7
## ການອຸດໜູນເສຍຊີວິດ

**ມາດຕາ 39 (ປັບປຸງ) ເງື່ອນໄຂຮັບການອຸດໜູນເສຍຊີວິດ**

ຜູ້ທີ່ຮັບການອຸດໜູນເສຍຊີວິດ ມີເງື່ອນໄຂ ດັ່ງນີ້:

1. ຜູ້ປະກັນຕົນ, ຜົວ ຫຼື ເມຍ ແລະ ລູກທີ່ມີອາຍຸບໍ່ເກີນ ສິບແປດປີ ເສຍຊີວິດ;
2. ມີເອກະສານຢັ້ງຢືນການເສຍຊີວິດ ຢ່າງຖືກຕ້ອງ.

ສໍາລັບເງື່ອນໄຂຮັບການອຸດໜູນເສຍຊີວິດ ຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບ ເພື່ອປະເທດຊາດໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 40 (ປັບປຸງ) ການຄິດໄລ່ເງິນອຸດໜູນເສຍຊີວິດ**

ເງິນອຸດໜູນເສຍຊີວິດໃຫ້ຄິດໄລ່ ດັ່ງນີ້:

1. ຜູ້ມີປີການແຕ່ ໜຶ່ງເດືອນ ຫາ ໜຶ່ງປີ ສໍາລັບກໍລະນີເສຍຊີວິດຍ້ອນສູ້ຮົບ ຫຼື ຮັບໃຊ້ການສູ້ຮົບ, ປະສົບອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ແລະ ສາມເດືອນ ຫາ ໜຶ່ງປີ ສໍາລັບກໍລະນີເສຍຊີວິດຍ້ອນປະສົບອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ ໃຫ້ຄິດໄລ່ເທົ່າກັບ ສິບຫ້າ ເດືອນຂອງເງິນປະກັນຕົນ, ເງິນອຸດໜູນບໍານານ ຫຼື ເງິນອຸດໜູນເສຍກໍາລັງແຮງງານເດືອນສຸດທ້າຍ ເປັນຈຸດເລີ່ມ;

2. ຜູ້ມີປີການເກີນ ໜຶ່ງປີ ຫາ ຫົກປີ ໃຫ້ຄິດໄລ່ເພີ່ມໃຫ້ ໜຶ່ງເດືອນ ຕໍ່ປີ ທີ່ເກີນ, ສໍາລັບຜູ້ມີປີການແຕ່ ເຈັດປີ ຂຶ້ນໄປ ໃຫ້ຄິດໄລ່ເພີ່ມ ເຄິ່ງເດືອນ ຕໍ່ຈໍານວນປີທີ່ເກີນ;

3. ຜົວ ຫຼື ເມຍ ຂອງຜູ້ປະກັນຕົນ, ຜູ້ຮັບອຸດໜູນບໍານານ ແລະ ຜູ້ຮັບອຸດໜູນເສຍກໍາລັງແຮງງານ ຫາກເສຍຊີວິດ ໃຫ້ຄິດໄລ່ເທົ່າກັບ ຫົກເດືອນ ຂອງເງິນປະກັນຕົນ, ເງິນອຸດໜູນບໍານານ ຫຼື ເງິນອຸດໜູນເສຍກໍາລັງແຮງງານ, ຖ້າຜົວ ຫຼື ເມຍ ລ້ວນແຕ່ເປັນຜູ້ປະກັນຕົນ ເມື່ອຜູ້ໃດໜຶ່ງເສຍຊີວິດ ກໍຈະໄດ້ຮັບເງິນອຸດໜູນເສຍຊີວິດຂອງຜູ້ກ່ຽວເທົ່ານັ້ນ ໂດຍຈະບໍ່ໄດ້ຮັບເງິນອຸດໜູນເສຍຊີວິດຕາມສິດຂອງ ຜົວ ຫຼື ເມຍ ຕື່ມອີກ;

4. ລູກຂອງຜູ້ປະກັນຕົນ, ຜູ້ຮັບອຸດໜູນບໍານານ ຫຼື ຜູ້ຮັບອຸດໜູນເສຍກໍາລັງແຮງງານ ທີ່ມີອາຍຸບໍ່ເກີນສິບແປດປີ ຫາກເສຍຊີວິດໃຫ້ຄິດໄລ່ເທົ່າກັບ ສາມເດືອນ ຂອງເງິນປະກັນຕົນ, ເງິນອຸດໜູນບໍານານ ຫຼື ເງິນອຸດໜູນເສຍກໍາລັງແຮງງານ, ໃນກໍລະນີ ລູກທີ່ພໍ່ ແລະ ແມ່ ລ້ວນແຕ່ເປັນຜູ້ປະກັນຕົນ ຫາກເສຍຊີວິດຈະໄດ້ຮັບເງິນອຸດໜູນເສຍຊີວິດຕາມເງິນປະກັນຕົນຂອງ ພໍ່ ຫຼື ແມ່ ເທົ່ານັ້ນ;

5. ຜູ້ໄດ້ຮັບເງິນອຸດໜູນສະມາຊິກຄອບຄົວ ທີ່ເປັນ ຜົວ ຫຼື ເມຍ, ພໍ່ ຫຼື ແມ່ ແລະ ຜູ້ຮັບອຸດໜູນດູແລ ຫາກເສຍຊີວິດ ຈະໄດ້ຮັບເງິນອຸດໜູນເສຍຊີວິດເທົ່າກັບ ຫົກເດືອນ ແລະ ສໍາລັບລູກ ທີ່ໄດ້ຮັບເງິນອຸດໜູນສະມາຊິກຄອບຄົວ ຈະໄດ້ເທົ່າກັບ ສາມເດືອນ ຂອງເງິນອຸດໜູນຜູ້ກ່ຽວ.

## ໝວດທີ 8
## ການອຸດໜູນສະມາຊິກຄອບຄົວ

### ມາດຕາ 41 (ປັບປຸງ) ເງື່ອນໄຂຮັບການອຸດໜູນສະມາຊິກຄອບຄົວ

ສະມາຊິກຄອບຄົວ ຈະໄດ້ຮັບການອຸດໜູນສະມາຊິກຄອບຄົວ ກໍຕໍ່ເມື່ອ ຜູ້ປະກັນຕົນ, ຜູ້ຮັບບໍານານ ແລະ ຜູ້ຮັບອຸດໜູນເສຍກໍາລັງແຮງງານ ໄດ້ເສຍຊີວິດ ແລະ ໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມ ຫ້າປີ ຂຶ້ນໄປ.

ສະມາຊິກຄອບຄົວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຜົວ ມີອາຍຸກະສຽນ ຫົກສິບປີ, ເມຍ ຫ້າສິບຫ້າປີ ຂຶ້ນໄປ ນັບແຕ່ວັນຜູ້ປະກັນຕົນເສຍຊີວິດທີ່ບໍ່ມີລາຍໄດ້ປົກກະຕິ ແລະ ບໍ່ໄດ້ແຕ່ງດອງໃໝ່ ຫຼື ເປັນຜູ້ເສຍກໍາລັງແຮງງານ ທີ່ບໍ່ໄດ້ຮັບເງິນອຸດໜູນໃດໜຶ່ງນໍາອົງການປະກັນສັງຄົມແຫ່ງຊາດ;

2. ລູກຄີງ, ລູກລ້ຽງ ຫຼື ລູກນ້ຳ ທີ່ມີອາຍຸສິບແປດປີ ລົງມາ ຈະໄດ້ຮັບອຸດໜູນສະມາຊິກຄອບຄົວນໍາ ພໍ່ ຫຼື ແມ່ ທີ່ປະກັນຕົນ;

ລູກທີ່ເປັນຄົນພິການ ຫຼື ເສຍຈິດ ໃນໄລຍະແຕ່ກໍາເນີດ ຫາ ອາຍຸ ສິບແປດປີ ທີ່ບໍ່ສາມາດເຮັດວຽກ ຫຼື ບໍ່ມີລາຍໄດ້ໃດໜຶ່ງ ຈະໄດ້ຮັບເງິນອຸດໜູນເປັນລາຍເດືອນຕະຫຼອດຊີວິດ. ສ່ວນ ລູກ ທີ່ມີ ພໍ່ ແລະ ແມ່ ທັງສອງເປັນຜູ້ປະກັນຕົນ ໄດ້ເສຍຊີວິດ ຈະໄດ້ຮັບອຸດໜູນສະມາຊິກຄອບຄົວນໍາ ພໍ່ ຫຼື ແມ່;

3. ກໍລະນີ ຜູ້ປະກັນຕົນ ເປັນລູກຄົນດຽວ ຫຼື ລູກໂທນ ເປັນຜູ້ເບິ່ງແຍງລ້ຽງດູພໍ່ແມ່ ຫາກເສຍຊີວິດ, ພໍ່ ມີອາຍຸກະສຽນ ຫົກສິບປີ ແລະ ແມ່ມີອາຍຸກະສຽນ ຫ້າສິບຫ້າປີ ຂຶ້ນໄປ ຊຶ່ງບໍ່ມີລາຍໄດ້ປົກກະຕິ ກໍຈະໄດ້ຮັບເງິນອຸດໜູນເປັນລາຍເດືອນຕະຫຼອດຊີວິດ.

ພໍ່ ຫຼື ແມ່ ທີ່ລູກ ໄປເສຍສະລະຊີວິດຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບໝົດທຸກຄົນ ຈະໄດ້ຮັບການອຸດໜູນຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 42 ການຄິດໄລ່ເງິນອຸດໜູນສະມາຊິກຄອບຄົວ**

ເງິນອຸດໜູນສະມາຊິກຄອບຄົວ ໃຫ້ຄິດໄລ່ ເປັນລາຍເດືອນ ດັ່ງນີ້:

1. ຜົວ ຫຼື ເມຍ ຈະໄດ້ຮັບເທົ່າກັບ ສາມສິບ ສ່ວນຮ້ອຍ (30%) ຂອງເງິນປະກັນຕົນ, ເງິນອຸດໜູນບໍານານ ຫຼື ເງິນອຸດໜູນເສຍກໍາລັງແຮງງານ ເດືອນສຸດທ້າຍຂອງຜູ້ເສຍຊີວິດ;

2. ລູກ ຈະໄດ້ຮັບຜູ້ລະ ຊາວ ສ່ວນຮ້ອຍ (20%) ຂອງເງິນປະກັນຕົນ, ເງິນອຸດໜູນບໍານານ ຫຼື ເງິນອຸດໜູນເສຍກໍາລັງແຮງງານເດືອນສຸດທ້າຍ ຂອງຜູ້ເສຍຊີວິດ, ຖ້າຫາກມີລູກບໍ່ທັນພົ້ນກະສຽນຫຼາຍຄົນນັ້ນ ເງິນອຸດໜູນລູກ ລວມທັງໝົດບໍ່ໃຫ້ເກີນ ຫົກສິບ ສ່ວນຮ້ອຍ (60%);

3. ພໍ່ ຫຼື ແມ່ ຈະໄດ້ຮັບເທົ່າກັບ ສາມສິບ ສ່ວນຮ້ອຍ (30%) ຂອງເງິນເດືອນປະກັນຕົນ, ເງິນອຸດໜູນບໍານານ ຫຼື ເງິນອຸດໜູນເສຍກໍາລັງແຮງງານເດືອນສຸດທ້າຍຂອງຜູ້ເສຍຊີວິດ. ຖ້າຫາກ ພໍ່ ແລະ ແມ່ ລ້ວນແຕ່ໄດ້ຮັບເງິນອຸດໜູນນັ້ນ ລວມທັງໝົດບໍ່ໃຫ້ເກີນ ຫ້າສິບ ສ່ວນຮ້ອຍ (50%);

ເງິນອຸດໜູນສະມາຊິກຄອບຄົວຂອງ ຜົວ ຫຼື ເມຍ ແລະ ລູກ ໄດ້ຮັບທັງໝົດສູງສຸດບໍ່ໃຫ້ເກີນ ແປດສິບ ສ່ວນຮ້ອຍ (80%) ຂອງເງິນປະກັນຕົນ, ເງິນອຸດໜູນບໍານານ ຫຼື ເງິນອຸດໜູນເສຍກໍາລັງແຮງງານເດືອນສຸດທ້າຍຂອງຜູ້ເສຍຊີວິດ.

## ພາກທີ IV
## ການອຸດໜູນປະກັນສັງຄົມພາກວິສາຫະກິດ ແລະ ຜູ້ສະໝັກໃຈ
### ໝວດທີ 1
### ການອຸດໜູນປະກັນສຸຂະພາບ

**ມາດຕາ 43 (ປັບປຸງ) ເງື່ອນໄຂຮັບການອຸດໜູນປະກັນສຸຂະພາບ**

ຜູ້ທີ່ຮັບການອຸດໜູນປະກັນສຸຂະພາບ ມີເງື່ອນໄຂ ດັ່ງນີ້:

1. ໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມແຕ່ ໜຶ່ງເດືອນ ຂຶ້ນໄປ ສໍາລັບການເກີດອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ແລະ ການບໍລິການໃນເວລາຖືພາ ແລະ ອອກລູກ;

2. ໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມແຕ່ ສາມເດືອນ ຂຶ້ນໄປ ສໍາລັບການເກີດອຸປະຕິເຫດອື່ນ ແລະ ພະຍາດທົ່ວໄປ;

3. ຜົວ ຫຼື ເມຍ ທີ່ບໍ່ແມ່ນຜູ້ປະກັນຕົນ ແລະ ລູກ ຂອງຜູ້ກ່ຽວ ທີ່ມີອາຍຸບໍ່ເກີນ ສິບແປດປີ ຫຼື ຍັງສືບຕໍ່ສຶກສາຮ່ຳຮຽນ ທີ່ຍັງບໍ່ທັນໄດ້ແຕ່ງດອງ ຫຼື ຜູ້ທີ່ໄດ້ແຕ່ງດອງແລ້ວ ແຕ່ຄູ່ສົມລົດບໍ່ແມ່ນຜູ້ປະກັນຕົນ ຊຶ່ງມີອາຍຸບໍ່ເກີນ ຊາວສາມປີ ໄດ້ຮັບການອຸດໜູນປິ່ນປົວສຸຂະພາບ.

ໃນກໍລະນີຜູ້ປະກັນຕົນຫາກເສຍຊີວິດ ຜົວ ຫຼື ເມຍ ແລະ ລູກ ຂອງຜູ້ກ່ຽວ ໄດ້ຮັບການອຸດໜູນປິ່ນປົວສຸຂະພາບ ພາຍໃນເວລາ ສາມເດືອນ ນັບແຕ່ຜູ້ປະກັນຕົນໄດ້ເສຍຊີວິດເປັນຕົ້ນໄປ.

**ມາດຕາ 44 (ປັບປຸງ) ການຄິດໄລ່ເງິນອຸດໜູນປະກັນສຸຂະພາບ**

ການຄິດໄລ່ເງິນ ແລະ ການຈັດຕັ້ງປະຕິບັດອຸດໜູນປະກັນສຸຂະພາບ ໄດ້ກຳນົດໄວ້ໃນກົດໝາຍ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ.

## ໝວດທີ 2
## ການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ

**ມາດຕາ 45 (ປັບປຸງ) ເງື່ອນໄຂຮັບການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ**

ຜູ້ທີ່ຮັບການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ມີເງື່ອນໄຂ ດັ່ງນີ້:

1. ໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມ ນັບແຕ່ ໜຶ່ງເດືອນ ຂຶ້ນໄປ;
2. ໄດ້ພັກວຽກເພື່ອປິ່ນປົວ ຫຼື ຟື້ນຟູສຸຂະພາບ, ຂາດສະມັດຖະພາບແຮງງານ ແລະ ສະພາວະປົກກະຕິທາງຈິດ, ສູນເສຍອະໄວຍະວະ, ເສຍອົງຄະໃດໜຶ່ງຂອງຮ່າງກາຍ;
3. ເສຍຊີວິດຍ້ອນປະສົບອຸປະຕິເຫດແຮງງານ;
4. ເປັນພະຍາດອາຊີບ ທີ່ເກີດຈາກວຽກງານວິຊາສະເພາະ.

ສຳລັບເງື່ອນໄຂທີ 2 ແລະ 4 ເທິງນີ້ ຕ້ອງມີການຢັ້ງຢືນການແພດ.

ໃນກໍລະນີ ມີເຈດຕະນາເຮັດໃຫ້ເກີດອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ຈະບໍ່ຖືເປັນເງື່ອນໄຂຮັບການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ.

**ມາດຕາ 46 (ໃໝ່) ປະເພດ ແລະ ການຄິດໄລ່ການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ**

ປະເພດ ແລະ ການຄິດໄລ່ການອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ໃຫ້ປະຕິບັດຕາມແຕ່ລະປະເພດ ເຊັ່ນ ການອຸດໜູນປ່ວຍການ, ການອຸດໜູນເສຍກຳລັງແຮງງານ, ການອຸດໜູນເສຍຊີວິດ ແລະ ການອຸດໜູນສະມາຊິກຄອບຄົວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 51, 53, 54, 55, 56, 57, 63 ແລະ ມາດຕາ 65 ຂອງກົດໝາຍສະບັບນີ້.

## ໝວດທີ 3
## ການອຸດໜູນອອກລູກ

**ມາດຕາ 47 (ປັບປຸງ) ເງື່ອນໄຂຮັບການອຸດໜູນອອກລູກ**

ຜູ້ທີ່ຮັບເງິນອຸດໜູນອອກລູກ ມີເງື່ອນໄຂ ດັ່ງນີ້:

1. ໄດ້ມອບເງິນເຂົ້າກອງທຶນປະກັນສັງຄົມແຕ່ ຫົກເດືອນ ຂຶ້ນໄປ ພາຍໃນເວລາ ສິບສອງ ເດືອນຄືນຫຼັງນັບແຕ່ວັນອອກລູກ, ຫຼຸລູກ, ລູກຕາຍໃນທ້ອງ ຈະໄດ້ຮັບເງິນບຳເນັດອອກລູກເທື່ອດຽວ;

2. ໄດ້ມອບເງິນເຂົ້າກອງທຶນປະກັນສັງຄົມແຕ່ ເກົ້າເດືອນ ຂຶ້ນໄປ ພາຍໃນເວລາ ສິບສອງ ເດືອນຄືນຫຼັງນັບແຕ່ວັນອອກລູກ, ຫຼຸລູກ, ລູກຕາຍໃນທ້ອງ ຫຼື ເອົາເດັກເກີດໃໝ່ທີ່ມີອາຍຸ ສາມເດືອນລົງມາ ເປັນລູກ ລ້ຽງ ຈະໄດ້ຮັບເງິນອຸດໜູນອອກລູກເປັນລາຍເດືອນ;

3. ອອກລູກ, ຫຼຸລູກ ຫຼື ລູກຕາຍໃນທ້ອງທີ່ມີອາຍຸຖືພາ ຫົກເດືອນຂຶ້ນໄປ ໂດຍມີການຢັ້ງຢືນ ການແພດ.

ສຳລັບຜູ້ປະກັນຕົນທີ່ມີອາຍຸຖືພາ ສອງເດືອນ ຫາ ຫ້າເດືອນ ຫາກຫຼຸລູກຈະໄດ້ຮັບເງິນບຳເນັດ ອອກລູກ.

ຜູ້ປະກັນຕົນທີ່ເອົາເດັກເກີດໃໝ່ທີ່ມີອາຍຸ ສາມເດືອນລົງມາ ເປັນລູກລ້ຽງ ທີ່ຖືກຕ້ອງຕາມກົດ ໝາຍຈະໄດ້ຮັບເງິນອຸດໜູນອອກລູກຕາມໄລຍະການພັກວຽກຕົວຈິງແຕ່ສູງສຸດບໍ່ໃຫ້ເກີນ ສາມເດືອນ.

ເມຍ ຂອງຜູ້ປະກັນຕົນ ທີ່ບໍ່ແມ່ນສະມາຊິກປະກັນສັງຄົມ ກໍຈະໄດ້ຮັບບຳເນັດອອກລູກຕາມສິດ ຂອງຜົວ.

ສຳລັບ ການຫຼຸລູກ ຫຼື ເອົາລູກອອກ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະບໍ່ໄດ້ຮັບເງິນອຸດໜູນດັ່ງ ກ່າວນີ້.

## ມາດຕາ 48 (ປັບປຸງ) ການຄິດໄລ່ເງິນບຳເນັດອອກລູກ

ຜູ້ປະກັນຕົນ ຫຼື ເມຍຂອງຜູ້ປະກັນຕົນ ທີ່ມີອາຍຸຖືພາ ສອງເດືອນ ຂຶ້ນໄປ ຈະໄດ້ຮັບເງິນບຳ ເນັດອອກ ລູກ, ຫຼຸລູກ ຫຼື ລູກຕາຍໃນທ້ອງ ເທົ່າກັບ ຫົກສິບ ສ່ວນຮ້ອຍ (60%) ຂອງເງິນເດືອນປະກັນຕົນ ສະເລ່ຍພາຍໃນ ຫົກເດືອນຄືນຫຼັງ ຕໍ່ລູກໜຶ່ງຄົນ.

## ມາດຕາ 49 (ປັບປຸງ) ການຄິດໄລ່ເງິນອຸດໜູນອອກລູກ

ຜູ້ປະກັນຕົນເພດຍິງ ທີ່ເຮັດວຽກໃນຫົວໜ່ວຍແຮງງານ ແລະ ຜູ້ປະກັນຕົນສະໝັກໃຈທີ່ອອກ ລູກ, ຫຼຸລູກ, ລູກຕາຍໃນທ້ອງ ຫຼື ເອົາເດັກເກີດໃໝ່ທີ່ມີອາຍຸ ສາມເດືອນລົງມາ ເປັນລູກລ້ຽງຈະໄດ້ຮັບເງິນອຸດ ໜູນອອກລູກເທົ່າກັບ ແປດສິບ ສ່ວນຮ້ອຍ (80%) ຂອງເງິນປະກັນຕົນຂອງຜູ້ກ່ຽວ ສະເລ່ຍພາຍໃນເວລາ ຫົກ ເດືອນຄືນຫຼັງ ໃນໄລຍະ ໜຶ່ງຮ້ອຍຫ້າວັນ ແລະ ໜຶ່ງຮ້ອຍຊາວວັນ ຖ້າຫາກແມ່ນການອອກລູກຝາແຝດ. ສຳລັບ ສ່ວນຜິດດ່ຽງຂອງເງິນປະກັນຕົນ, ເງິນເດືອນ ຫຼື ຄ່າແຮງງານທັງໝົດນັ້ນ ຜູ້ໃຊ້ແຮງງານເປັນຜູ້ຮັບຜິດຊອບຈ່າຍ ໃຫ້ຜູ້ກ່ຽວ.

ພາຍຫຼັງສິ້ນສຸດໄລຍະການຮັບອຸດໜູນອອກລູກດັ່ງກ່າວນີ້ແລ້ວ ຫາກສຸຂະພາບຍັງບໍ່ແຂງແຮງ ຊຶ່ງ ຕ້ອງໄດ້ສືບຕໍ່ພັກວຽກ ເພື່ອຟື້ນຟູສຸຂະພາບ ກໍຈະສືບຕໍ່ໄດ້ຮັບອຸດໜູນປ່ວຍການ.

## ໝວດທີ 4
## ການອຸດໜູນປ່ວຍການ

**ມາດຕາ 50 (ປັບປຸງ) ເງື່ອນໄຂຮັບການອຸດໜູນປ່ວຍການ**

ຜູ້ທີ່ຮັບການອຸດໜູນປ່ວຍການ ມີເງື່ອນໄຂ ດັ່ງນີ້:

1. ໄດ້ມອບເງິນເຂົ້າກອງທຶນປະກັນສັງຄົມ ແຕ່ໜຶ່ງເດືອນ ຂຶ້ນໄປ ສໍາລັບອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ;
2. ໄດ້ມອບເງິນເຂົ້າກອງທຶນປະກັນສັງຄົມ ແຕ່ ສາມເດືອນ ຂຶ້ນໄປ ພາຍໃນເວລາ ຫົກເດືອນ ຄືນຫຼັງ ກ່ອນການເຈັບປ່ວຍ ສໍາລັບອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ;
3. ໄດ້ຖືກຢຸດຈ່າຍເງິນເດືອນຊົ່ວຄາວ ໂດຍການຢັ້ງຢືນຈາກຜູ້ໃຊ້ແຮງງານ;
4. ມີການຢັ້ງຢືນການແພດ.

**ມາດຕາ 51 (ປັບປຸງ) ການຄິດໄລ່ເງິນອຸດໜູນປ່ວຍການ**

ເງິນອຸດໜູນປ່ວຍການ ໃຫ້ຄິດໄລ່ ດັ່ງນີ້:

1. ຜູ້ປະກັນຕົນ ທີ່ພັກວຽກຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ພາຍໃນເວລາ ຫົກເດືອນ ທໍາອິດຈະໄດ້ຮັບເງິນອຸດໜູນປ່ວຍການ ແປດສິບ ສ່ວນຮ້ອຍ (80%) ຂອງເງິນປະກັນຕົນຂອງຜູ້ກ່ຽວ ສະເລ່ຍພາຍໃນເວລາ ຫົກເດືອນຄືນຫຼັງ. ຖ້າຜູ້ກ່ຽວຍັງສືບຕໍ່ພັກວຽກ ເພື່ອປິ່ນປົວ ຫຼື ຟື້ນຟູສຸຂະພາບຕື່ມອີກ ຈະໄດ້ຮັບ ເຈັດສິບ ສ່ວນຮ້ອຍ (70%) ແຕ່ບໍ່ເກີນຫົກເດືອນ ເປັນໄລຍະສຸດທ້າຍ;
2. ຜູ້ປະກັນຕົນ ທີ່ໄດ້ພັກວຽກຍ້ອນປະສົບອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ, ການອອກລູກ, ຫຼຸລູກ ຫຼື ລູກຕາຍໃນທ້ອງ ພາຍໃນເວລາ ຫົກເດືອນທໍາອິດ ຈະໄດ້ຮັບເງິນອຸດໜູນປ່ວຍການ ເຈັດສິບ ສ່ວນຮ້ອຍ (70%) ຂອງເງິນປະກັນຕົນຂອງຜູ້ກ່ຽວ ສະເລ່ຍພາຍໃນເວລາ ຫົກເດືອນຄືນຫຼັງ. ຖ້າຜູ້ກ່ຽວຍັງສືບຕໍ່ພັກວຽກ ເພື່ອປິ່ນປົວ ຫຼື ຟື້ນຟູສຸຂະພາບຕື່ມອີກ ຈະໄດ້ຮັບ ຫົກສິບ ສ່ວນຮ້ອຍ (60%) ແຕ່ບໍ່ເກີນ ຫົກເດືອນ ເປັນໄລຍະສຸດທ້າຍ.

ການຄິດໄລ່ເງິນອຸດໜູນປ່ວຍການຕາມຈໍານວນວັນພັກວຽກຕົວຈິງ ໃຫ້ຖືເອົາການສະເລ່ຍ ສາມສິບວັນ ຕໍ່ເດືອນເປັນຕົວຕັ້ງ.

ໃນກໍລະນີສຸຂະພາບຂອງຜູ້ກ່ຽວ ຫາກຍັງບໍ່ດີຂຶ້ນ ຕ້ອງໄດ້ກວດ ແລະ ປະເມີນສຸຂະພາບຄືນ ໂດຍມີການຢັ້ງຢືນການແພດ ເພື່ອຮັບການອຸດໜູນເສຍກໍາລັງແຮງງານ.

## ໝວດທີ 5
## ການອຸດໜູນເສຍກໍາລັງແຮງງານ

**ມາດຕາ 52 (ໃໝ່) ເງື່ອນໄຂຮັບການອຸດໜູນເສຍກໍາລັງແຮງງານ**

ຜູ້ທີ່ຮັບການອຸດໜູນເສຍກໍາລັງແຮງງານ ມີເງື່ອນໄຂ ດັ່ງນີ້:

1. ໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມນັບແຕ່ ໜຶ່ງເດືອນຂຶ້ນໄປ ສໍາລັບອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ແລະ ສິບສອງເດືອນຂຶ້ນໄປ ສໍາລັບອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ;

2. ໄດ້ຮັບການຕີລາຄາຈັດປະເພດ ແລະ ລະດັບການເສຍກໍາລັງແຮງງານ ຕາມລະບຽບການທີ່ກ່ຽວຂ້ອງ.

ສໍາລັບຜູ້ເສຍກໍາລັງແຮງງານກ່ອນການເຂົ້າປະກັນຕົນ ຈະບໍ່ໄດ້ຖືເປັນເງື່ອນໄຂຮັບການອຸດໜູນເສຍກໍາລັງແຮງງານນີ້.

**ມາດຕາ 53 (ປັບປຸງ) ປະເພດ ແລະ ລະດັບການເສຍກໍາລັງແຮງງານ**

ປະເພດ ແລະ ລະດັບການເສຍກໍາລັງແຮງງານ ໄດ້ກໍານົດ ດັ່ງນີ້:

1. ປະເພດທີໜຶ່ງ ມີລະດັບການເສຍກໍາລັງແຮງງານແຕ່ ແປດສິບເອັດ ສ່ວນຮ້ອຍ (81%) ຫາ ໜຶ່ງຮ້ອຍ ສ່ວນຮ້ອຍ (100%);

2. ປະເພດທີສອງ ມີລະດັບການເສຍກໍາລັງແຮງງານແຕ່ ເຈັດສິບເອັດ ສ່ວນຮ້ອຍ (71%) ຫາ ແປດສິບ ສ່ວນຮ້ອຍ (80%);

3. ປະເພດທີສາມ ມີລະດັບການເສຍກໍາລັງແຮງງານແຕ່ ຫົກສິບເອັດ ສ່ວນຮ້ອຍ (61%) ຫາ ເຈັດສິບ ສ່ວນຮ້ອຍ (70%);

4. ປະເພດທີສີ່ ມີລະດັບການເສຍກໍາລັງແຮງງານແຕ່ ຫ້າສິບເອັດ ສ່ວນຮ້ອຍ (51%) ຫາ ຫົກສິບ ສ່ວນຮ້ອຍ (60%);

5. ປະເພດທີຫ້າ ມີລະດັບການເສຍກໍາລັງແຮງງານແຕ່ ສີ່ສິບເອັດ ສ່ວນຮ້ອຍ (41%) ຫາ ຫ້າສິບ ສ່ວນຮ້ອຍ (50%);

6. ປະເພດທີຫົກ ມີລະດັບການເສຍກໍາລັງແຮງງານແຕ່ ສິບຫ້າ ສ່ວນຮ້ອຍ (15%) ຫາ ສີ່ສິບ ສ່ວນຮ້ອຍ (40%).

ສໍາລັບ ຜູ້ມີລະດັບການເສຍກໍາລັງແຮງງານແຕ່ ໜຶ່ງ ສ່ວນຮ້ອຍ (1%) ຫາ ສິບສີ່ ສ່ວນຮ້ອຍ (14%) ຈະບໍ່ຢູ່ໃນເງື່ອນໄຂຮັບການອຸດໜູນເສຍກໍາລັງແຮງງານ.

ລະດັບການເສຍກໍາລັງແຮງງານ ນັບແຕ່ປະເພດທີໜຶ່ງ ຫາ ປະເພດທີຫ້າ ຈະໄດ້ຮັບເງິນອຸດໜູນເສຍກໍາລັງແຮງງານ ເປັນລາຍເດືອນ, ສ່ວນປະເພດທີຫົກ ຈະໄດ້ຮັບເງິນອຸດໜູນເສຍກໍາລັງແຮງງານເທື່ອດຽວ.

ການຕີລາຄາຈັດປະເພດ ແລະ ລະດັບການເສຍກໍາລັງແຮງງານ ໃຫ້ປະຕິບັດຕາມປຶ້ມຄູ່ມືການແບ່ງຂັ້ນຂາດສະມັດຖະພາບແຮງງານ ຂອງຄົນເຈັບ-ພິການ ທີ່ກະຊວງສາທາລະນະສຸກ ກໍານົດ.

ໃນກໍລະນີ ມີເຫດຜົນທີ່ຈໍາເປັນໃຫ້ນໍາເອົາຜົນການຕີລາຄາຈັດ ປະເພດ ແລະ ລະດັບການເສຍກໍາລັງແຮງງານສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງພິຈາລະນາ.

**ມາດຕາ 54 (ປັບປຸງ) ການຄິດໄລ່ເງິນອຸດໜູນເສຍກໍາລັງແຮງງານລາຍເດືອນ**

ການຄິດໄລ່ເງິນອຸດໜູນເສຍກໍາລັງແຮງງານລາຍເດືອນ ໃຫ້ຄິດໄລ່ໂດຍເອົາເງິນປະກັນຕົນສະເລ່ຍພາຍໃນເວລາ ຫົກເດືອນຄືນຫຼັງ ຂອງຜູ້ກ່ຽວກ່ອນເສຍກໍາລັງແຮງງານ ຄູນ ກັບລະດັບສ່ວນຮ້ອຍຂອງເງິນອຸດໜູນເສຍກໍາລັງແຮງງານຕາມແຕ່ລະປະເພດ ດັ່ງນີ້:

1. ປະເພດທີໜຶ່ງ ເທົ່າກັບ ແປດສິບ ສ່ວນຮ້ອຍ (80%);

2. ປະເພດທີສອງ ເທົ່າກັບ ເຈັດສິບ ສ່ວນຮ້ອຍ (70%);

3. ປະເພດທີສາມ ເທົ່າກັບ ຫົກສິບ ສ່ວນຮ້ອຍ (60%);

4. ປະເພດທີສີ່ ເທົ່າກັບ ຫ້າສິບ ສ່ວນຮ້ອຍ (50%);

5. ປະເພດທີຫ້າ ເທົ່າກັບ ສີ່ສິບ ສ່ວນຮ້ອຍ (40%).

ການຄິດໄລ່ເງິນອຸດໜູນເສຍກຳລັງແຮງງານ ໃຫ້ຄິດໄລ່ເທົ່າກັບ ໜຶ່ງຮ້ອຍ ສ່ວນຮ້ອຍ (100%) ສຳລັບຜູ້ເສຍກຳລັງແຮງງານຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ແລະ ແປດສິບ ສ່ວນຮ້ອຍ (80%) ສຳລັບຜູ້ເສຍກຳລັງແຮງງານຍ້ອນອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ ຂອງລະດັບສ່ວນຮ້ອຍເງິນອຸດໜູນເສຍກຳລັງແຮງງານແຕ່ລະປະເພດ. ຖ້າຜູ້ເສຍກຳລັງແຮງງານຫາກຍັງເຮັດວຽກມີເງິນເດືອນ ເງິນອຸດໜູນເສຍກຳລັງແຮງງານຈະໄດ້ເທົ່າກັບ ຫ້າສິບ ສ່ວນຮ້ອຍ (50%) ແລະ ຖ້າເຂົ້າຮັບບຳນານຈະໄດ້ຮັບ ຊາວຫ້າ ສ່ວນຮ້ອຍ (25%) ຂອງເງິນອຸດໜູນເສຍກຳລັງແຮງງານຂອງຜູ້ກ່ຽວ.

ຜູ້ປະກັນຕົນ ທີ່ໄດ້ຮັບເງິນອຸດໜູນເສຍກຳລັງແຮງງານມາກ່ອນ ຫາກໄດ້ຮັບເງິນອຸດໜູນບຳເນັດອອກການເທື່ອດຽວແລ້ວ ຜູ້ກ່ຽວຈະໄດ້ຮັບເງິນອຸດໜູນເສຍກຳລັງແຮງງານ ເທົ່າກັບອັດຕາສ່ວນຮ້ອຍເງິນອຸດໜູນເສຍກຳລັງແຮງງານຂອງຜູ້ຮັບອຸດໜູນບຳນານໄປຕະຫຼອດຊີວິດ.

ສຳລັບ ລະດັບສ່ວນຮ້ອຍຂອງເງິນອຸດໜູນເສຍກຳລັງແຮງງານ ຂອງຜູ້ຮັບອຸດໜູນເສຍກຳລັງແຮງງານລາຍເດືອນ ກ່ອນກົດໝາຍສະບັບນີ້ ມີຜົນໃຊ້ບັງຄັບນັ້ນ ແມ່ນບໍ່ມີການປ່ຽນແປງ.

**ມາດຕາ 55 (ປັບປຸງ) ການປະກອບອຸປະກອນ ຫຼື ອົງຄະທຽມໃຫ້ຜູ້ຮັບອຸດໜູນເສຍກຳລັງແຮງງານ**

ຜູ້ຮັບອຸດໜູນເສຍກຳລັງແຮງງານລາຍເດືອນ ທີ່ມີຜົນກະທົບຕໍ່ການເຄື່ອນໄຫວວຽກງານ ແລະ ການດຳລົງຊີວິດ ຈະໄດ້ຮັບການປະກອບອຸປະກອນ ຫຼື ອົງຄະທຽມຕາມທີ່ລັດສະໜອງໃຫ້. ໃນກໍລະນີມີການໃຊ້ຈ່າຍສຳລັບອຸປະກອນ ຫຼື ອົງຄະທຽມນັ້ນ ໃຫ້ນຳໃຊ້ເງິນກອງທຶນປະກັນສັງຄົມ.

**ມາດຕາ 56 (ປັບປຸງ) ການອຸດໜູນຜູ້ດູແລ**

ການອຸດໜູນຜູ້ດູແລ ແມ່ນ ການສະໜອງເງິນອຸດໜູນ ໃຫ້ຜູ້ດູແລຜູ້ເສຍກຳລັງແຮງງານປະເພດໜຶ່ງ ເທົ່ານັ້ນ ຊຶ່ງຜູ້ດູແລ ຈະໄດ້ຮັບເງິນອຸດໜູນດູແລເທົ່າກັບ ຄ່າແຮງງານຂັ້ນຕ່ຳສຸດຂອງຜູ້ອອກແຮງງານ ຈົນກວ່າຜູ້ເສຍກຳລັງແຮງງານຈະເສຍຊີວິດ.

ສຳລັບຜູ້ຮັບເງິນອຸດໜູນຜູ້ດູແລ ກ່ອນກົດໝາຍສະບັບນີ້ມີຜົນໃຊ້ບັງຄັບນັ້ນ ແມ່ນບໍ່ມີການປ່ຽນແປງ.

**ມາດຕາ 57 (ປັບປຸງ) ການຄິດໄລ່ເງິນອຸດໜູນເສຍກຳລັງແຮງງານ ເທື່ອດຽວ**

ເງິນອຸດໜູນເສຍກຳລັງແຮງງານເທື່ອດຽວ ສຳລັບປະເພດທີຫົກ ໃຫ້ຄິດໄລ່ ດັ່ງນີ້:

1. ຜູ້ເສຍກຳລັງແຮງງານຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ໄດ້ຮັບເງິນອຸດໜູນເສຍກຳລັງແຮງງານເທື່ອດຽວ ເທົ່າກັບລະດັບການເສຍກຳລັງແຮງງານ ຄູນ ສິບສອງເດືອນ ຂອງເງິນປະກັນຕົນສະເລ່ຍພາຍໃນເວລາ ຫົກເດືອນຄືນຫຼັງ ຂອງຜູ້ກ່ຽວກ່ອນເສຍກຳລັງແຮງງານ;

2. ຜູ້ເສຍກຳລັງແຮງງານ ຍ້ອນອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປໄດ້ຮັບເງິນອຸດໜູນເສຍກຳລັງແຮງງານ ເທື່ອດຽວ ເທົ່າກັບລະດັບການເສຍກຳລັງແຮງງານ ຄູນ ສິບເດືອນ ຂອງເງິນປະກັນຕົນສະເລ່ຍພາຍໃນເວລາ ຫົກເດືອນຄືນຫຼັງ ຂອງຜູ້ກ່ຽວກ່ອນເສຍກຳລັງແຮງງານ.

## ໝວດທີ 6
## ການອຸດໜູນບຳນານ

### ມາດຕາ 58 (ປັບປຸງ) ເງື່ອນໄຂຮັບການອຸດໜູນບຳນານ

ຜູ້ຮັບການອຸດໜູນບຳນານ ມີເງື່ອນໄຂ ດັ່ງນີ້:

1. ມີອາຍຸກະສຽນ ຫົກສິບປີ, ສຳລັບເພດຍິງ ຈະສະໝັກໃຈອອກຮັບການອຸດໜູນບຳນານ ກ່ອນກໍໄດ້ ແຕ່ອາຍຸກະສຽນ ບໍ່ໃຫ້ຫຼຸດ ຫ້າສິບຫ້າປີ;
2. ຜູ້ເຮັດວຽກກັບທາດເບື່ອ, ເຄມີ ແລະ ສານພິດຕ່າງໆ ທີ່ເປັນອັນຕະລາຍຕໍ່ສຸຂະພາບຕິດຕໍ່ກັນແຕ່ ຫ້າປີ ຂຶ້ນໄປ ຕາມການຢັ້ງຢືນການແພດ, ເພດຊາຍ ມີອາຍຸກະສຽນ ຫ້າສິບຫ້າປີ ແລະ ເພດຍິງ ຫ້າສິບປີ;
3. ໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມແຕ່ ໜຶ່ງຮ້ອຍແປດສິບເດືອນ ຂຶ້ນໄປ, ສຳລັບຜູ້ປະກັນຕົນທີ່ເຂົ້າປະກັນສັງຄົມກ່ອນວັນທີ 1 ຕຸລາ 2014 ນັ້ນ ໃຫ້ມີປີການປະກັນຕົນ ຫົກສິບເດືອນ ຂຶ້ນໄປ;
4. ໄດ້ມອບເງິນສົມທົບຄົບເງື່ອນໄຂ ແຕ່ມີອາຍຸກະສຽນບໍ່ຄົບເງື່ອນໄຂ ສາມປີລົງມາ ກໍສາມາດຮັບອຸດໜູນບຳນານໄດ້, ອາຍຸກະສຽນຫຼຸດ ໜຶ່ງປີໃດ ໃຫ້ຫຼຸດເງິນອຸດໜູນບຳນານລົງ ໜຶ່ງ ສ່ວນຮ້ອຍ (1%);
5. ມີການຢັ້ງຢືນພັກຮັບບຳນານຢ່າງຖືກຕ້ອງ ຈາກພາກສ່ວນທີ່ກ່ຽວຂ້ອງ.

### ມາດຕາ 59 (ປັບປຸງ) ການຄິດໄລ່ເງິນອຸດໜູນບຳນານ

ການຄິດໄລ່ເງິນອຸດໜູນບຳນານ ໃຫ້ເອົາຄະແນນບຳນານທັງໝົດຂອງຜູ້ກ່ຽວ ຄູນ ກັບເງິນປະກັນຕົນສະເລ່ຍຄາດຄະເນຂອງຜູ້ປະກັນຕົນທັງໝົດ ຄູນ ຕົວດັດສະນີ ສອງ ສ່ວນຮ້ອຍ (2%) ຊຶ່ງວິທີການຄິດໄລ່ ມີດັ່ງນີ້:

1. ຄະແນນບຳນານທັງໝົດຂອງຜູ້ກ່ຽວ ແມ່ນ ຄະແນນບຳນານຈາກການຈ່າຍເງິນສົມທົບທັງໝົດ ບວກ ຄະແນນບຳນານ ຈາກການຢຸດຈ່າຍເງິນສົມທົບຊົ່ວຄາວ ບວກ ຄະແນນບຳນານນະໂຍບາຍ ຊຶ່ງມີການຄິດໄລ່ແຕ່ລະປະເພດຄະແນນບຳນານ:

1.1. ຄະແນນບຳນານຈາກການຈ່າຍເງິນສົມທົບ ແມ່ນ ຈຳນວນເງິນປະກັນຕົນສະເລ່ຍຂອງຜູ້ກ່ຽວໃນແຕ່ລະປີ ຫານ ໃຫ້ຈຳນວນເງິນປະກັນຕົນສະເລ່ຍ ຂອງຜູ້ປະກັນຕົນທັງໝົດໃນໄລຍະເວລາດຽວກັນ;

1.2. ຄະແນນບຳນານຈາກການຢຸດຈ່າຍເງິນສົມທົບຊົ່ວຄາວ ໃນເວລາຮັບເງິນອຸດໜູນປ່ວຍການ ຫຼື ອຸດໜູນອອກລູກ ແມ່ນ ຄະແນນບຳນານຈາກການຈ່າຍເງິນສົມທົບສະເລ່ຍໃນໄລຍະ ຊາວສີ່ເດືອນ ກ່ອນໄດ້ຮັບເງິນອຸດໜູນ ຫານ ໃຫ້ສາມສິບວັນ ຄູນ ກັບຈຳນວນວັນພັກຮັບເງິນອຸດໜູນ;

1.3. ຄະແນນບຳນານນະໂຍບາຍ ແມ່ນຄະແນນທີ່ຄິດໄລ່ໃຫ້ຜູ້ເລີ່ມຕົ້ນເຂົ້າປະກັນຕົນ ທີ່ມີອາຍຸກະສຽນ ເກີນ ສາມສິບປີ ຂຶ້ນໄປ ໃຫ້ຄິດໄລ່ເທົ່າກັບ 0,8 ຄະແນນ ຄູນ ກັບຈຳນວນປີທີ່ອາຍຸກະສຽນເກີນ, ຄະແນນນະໂຍບາຍດັ່ງກ່າວ ຄິດໄລ່ໃຫ້ສູງສຸດບໍ່ເກີນ 12 ຄະແນນ.

2. ເງິນເດືອນປະກັນຕົນສະເລ່ຍຂອງຜູ້ປະກັນຕົນທັງໝົດ ແມ່ນ ຈຳນວນເງິນເດືອນຂອງຜູ້ປະກັນຕົນທັງໝົດໃນໜຶ່ງປີ ຫານ ໃຫ້ຈຳນວນຄັ້ງຈ່າຍເງິນສົມທົບທັງໝົດຂອງຜູ້ປະກັນຕົນ ໃນປີດຽວກັນ ຊຶ່ງນຳໃຊ້ສຳລັບການຄິດໄລ່ຄະແນນບຳນານ.

ເງິນປະກັນຕົນສະເລ່ຍຄາດຄະເນຂອງຜູ້ປະກັນຕົນທັງໝົດ ແມ່ນ ຈຳນວນເງິນປະກັນຕົນສະເລ່ຍທັງໝົດໃນໜຶ່ງປີຜ່ານມາ ບວກ ກັບອັດຕາການເໜັງຕີງທີ່ສົມທຽບໃສ່ປີກ່ອນນັ້ນ ໜຶ່ງປີ ເພື່ອນຳໃຊ້ເຂົ້າໃນການຄິດໄລ່ເງິນອຸດໜູນບຳນານ. ຄ່າແຮງງານສະເລ່ຍຄາດຄະເນຂອງຜູ້ປະກັນຕົນທັງໝົດຈະໄດ້ປັບປຸງໃນ ເດືອນມັງກອນ ຂອງແຕ່ລະປີ.

3. ຕົວຄົງສະປີ ສອງ ສ່ວນຮ້ອຍ (2%) ແມ່ນຕົວກຳນົດອັດຕາຕອບແທນຄືນໃນແຕ່ລະປີ ຊຶ່ງສາມາດດັດປັບໃຫ້ສອດຄ່ອງກັບການຄິດໄລ່ເງິນອຸດໜູນບຳນານ ໃນແຕ່ລະໄລຍະ.

ເງິນເດືອນ ຫຼື ຄ່າແຮງງານສະເລ່ຍຄາດຄະເນຂອງຜູ້ປະກັນຕົນທັງໝົດ ສຳລັບຜູ້ອອກແຮງງານໃນຫົວໜ່ວຍແຮງງານ ແລະ ຜູ້ສະໝັກໃຈ ຈະໄດ້ປັບປຸງໃນ ເດືອນ ມັງກອນ ຂອງແຕ່ລະປີ.

ການຄິດໄລ່ເງິນອຸດໜູນບຳນານ ໃຫ້ຜູ້ປະກັນຕົນໃນຫົວໜ່ວຍແຮງງານ ແລະ ຜູ້ສະໝັກໃຈ ສູງສຸດບໍ່ເກີນ ເຈັດສິບຫ້າ ສ່ວນຮ້ອຍ (75%) ຂອງເງິນປະກັນຕົນຂອງຜູ້ກ່ຽວ.

### ມາດຕາ 60 (ປັບປຸງ) ການດັດປັບເງິນອຸດໜູນບຳນານ

ການດັດປັບເງິນອຸດໜູນບຳນານຂອງພາກວິສາຫະກິດ ແລະ ຜູ້ສະໝັກໃຈ ໃຫ້ປະຕິບັດຕາມການເໜັງຕີງ ຂອງເງິນປະກັນຕົນ ສະເລ່ຍຄາດຄະເນ ຂອງຜູ້ປະກັນຕົນທັງໝົດໃນເດືອນ ມັງກອນ ຂອງແຕ່ລະປີ.

### ມາດຕາ 61 (ປັບປຸງ) ການຄິດໄລ່ເງິນອຸດໜູນເທື່ອດຽວ

ຜູ້ອອກແຮງງານ ແລະ ຜູ້ສະໝັກໃຈ ທີ່ຄົບອາຍຸກະສຽນ ແຕ່ຈ່າຍເງິນສົມທົບ ຫຼື ມີປີປະກັນຕົນບໍ່ຄົບຕາມເງື່ອນໄຂ ຫຼື ຜູ້ມີບັນຫາສຸຂະພາບ ທີ່ບໍ່ສາມາດສືບຕໍ່ເຮັດວຽກ ຈະໄດ້ຮັບການອຸດໜູນເທື່ອດຽວ ຊຶ່ງເທົ່າກັບໜຶ່ງເດືອນເຄິ່ງ ຂອງເງິນປະກັນຕົນ ທີ່ສະເລ່ຍພາຍໃນເວລາ ຫົກສິບເດືອນ ຄືນຫຼັງ ຄູນ ກັບຈຳນວນປີປະກັນຕົນຂອງຜູ້ກ່ຽວ.

ສຳລັບ ຜູ້ປະກັນຕົນທີ່ບໍ່ຄົບເງື່ອນໄຂ ອາຍຸກະສຽນ ຫຼື ປີປະກັນຕົນ ຊຶ່ງໄດ້ອອກຈາກຫົວໜ່ວຍແຮງງານ ແຕ່ຜູ້ກ່ຽວຍັງຢູ່ໃນໄວກະສຽນເຮັດວຽກ ແລະ ສາມາດສືບຕໍ່ເຮັດວຽກ ຈະບໍ່ໄດ້ຮັບເງິນອຸດໜູນເທື່ອດຽວ ໂດຍຈະໄດ້ສະສົມເງິນສົມທົບຂອງຜູ້ກ່ຽວໄວ້ ເພື່ອພິຈາລະນາຮັບອຸດໜູນບຳນານ ຫຼື ອຸດໜູນເທື່ອດຽວ ເມື່ອອາຍຸກະສຽນຄົບຕາມເງື່ອນໄຂເທົ່ານັ້ນ.

ຜູ້ອອກແຮງງານຕ່າງປະເທດ ທີ່ໄດ້ກັບຄືນປະເທດ ພາຍຫຼັງສິ້ນສຸດສັນຍາແຮງງານ ຈະໄດ້ຮັບການອຸດໜູນເທື່ອດຽວຊຶ່ງເທົ່າກັບ ໜຶ່ງເດືອນເຄິ່ງ ຂອງເງິນປະກັນຕົນ ທີ່ສະເລ່ຍພາຍໃນເວລາ ຫົກສິບເດືອນ ຄືນຫຼັງ ຄູນ ກັບຈຳນວນປີປະກັນຕົນຂອງຜູ້ກ່ຽວ.

## ໝວດທີ 7
## ການອຸດໜູນເສຍຊີວິດ

**ມາດຕາ 62 (ປັບປຸງ) ເງື່ອນໄຂຮັບການອຸດໜູນເສຍຊີວິດ**

ຜູ້ທີ່ຮັບການອຸດໜູນເສຍຊີວິດ ມີເງື່ອນໄຂ ດັ່ງນີ້:

1. ໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມແຕ່ ໜຶ່ງເດືອນ ຂຶ້ນໄປ ສໍາລັບຜູ້ເສຍຊີວິດຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ;
2. ໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມແຕ່ ສາມເດືອນ ຂຶ້ນໄປ ສໍາລັບອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ ໂດຍສະເລ່ຍພາຍໃນເວລາ ສິບສອງເດືອນຄືນຫຼັງ ນັບແຕ່ວັນເສຍຊີວິດ;
3. ລູກ ມີອາຍຸບໍ່ເກີນ ສິບແປດປີ ຂອງຜູ້ປະກັນຕົນ;
4. ມີການຢັ້ງຢືນການເສຍຊີວິດ ຢ່າງຖືກຕ້ອງ.

ຜູ້ປະກັນຕົນ ທີ່ອອກວຽກ ຫຼື ຢຸດມອບເງິນສົມທົບ ກໍຍັງຈະໄດ້ຮັບເງິນອຸດໜູນເສຍຊີວິດ, ພາຍໃນເວລາ ສາມເດືອນ ຜົວ ຫຼື ເມຍ ແລະ ລູກ ຫາກເສຍຊີວິດ ກໍຈະໄດ້ຮັບເງິນອຸດໜູນເສຍຊີວິດ.

ຜູ້ໄດ້ຮັບເງິນອຸດໜູນສະມາຊິກຄອບຄົວ ຫາກເສຍຊີວິດ ກໍຈະໄດ້ຮັບເງິນອຸດໜູນເສຍຊີວິດ.

**ມາດຕາ 63 (ປັບປຸງ) ການຄິດໄລ່ເງິນອຸດໜູນເສຍຊີວິດ**

ເງິນອຸດໜູນເສຍຊີວິດໃຫ້ຄິດໄລ່ ດັ່ງນີ້:

1. ຜູ້ມີປີປະກັນຕົນ ແຕ່ໜຶ່ງເດືອນ ຫາ ໜຶ່ງປີ ສໍາລັບກໍລະນີເສຍຊີວິດຍ້ອນປະສົບອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ແລະ ສາມເດືອນ ຫາ ໜຶ່ງປີ ສໍາລັບກໍລະນີເສຍຊີວິດ ຍ້ອນປະສົບອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ ໃຫ້ຄິດໄລ່ເທົ່າກັບ ສິບຫ້າ ເດືອນຂອງເງິນປະກັນຕົນ ທີ່ສະເລ່ຍພາຍໃນເວລາຫົກເດືອນຄືນຫຼັງ, ເງິນອຸດໜູນບໍານານ ຫຼື ເງິນອຸດໜູນເສຍກໍາລັງແຮງງານ ເດືອນສຸດທ້າຍເປັນຈຸດເລີ່ມ;
2. ຜູ້ມີປີປະກັນຕົນເກີນ ໜຶ່ງ ປີ ຫາ ຫົກປີ ໃຫ້ຄິດໄລ່ເພີ່ມໃຫ້ ໜຶ່ງເດືອນ ຕໍ່ປີ ທີ່ເກີນ, ສໍາລັບຜູ້ມີປີປະກັນຕົນ ແຕ່ ເຈັດປີ ຂຶ້ນໄປ ໃຫ້ຄິດໄລ່ເພີ່ມ ເຄິ່ງເດືອນ ຕໍ່ຈໍານວນປີທີ່ເກີນ;
3. ຜົວ ຫຼື ເມຍ ຂອງຜູ້ປະກັນຕົນ, ຜູ້ຮັບອຸດໜູນບໍານານ ແລະ ຜູ້ຮັບອຸດໜູນເສຍກໍາລັງແຮງງານ ຫາກເສຍຊີວິດ ໃຫ້ຄິດໄລ່ເທົ່າກັບ ຫົກເດືອນ ຂອງເງິນປະກັນຕົນ, ເງິນອຸດໜູນບໍານານ ຫຼື ເງິນອຸດໜູນເສຍກໍາລັງແຮງງານ, ຖ້າຜົວ ຫຼື ເມຍ ລ້ວນແຕ່ເປັນຜູ້ປະກັນຕົນ ເມື່ອຜູ້ໃດໜຶ່ງເສຍຊີວິດກໍຈະໄດ້ຮັບເງິນອຸດໜູນເສຍຊີວິດຂອງຜູ້ກ່ຽວເທົ່ານັ້ນ ໂດຍຈະບໍ່ໄດ້ຮັບເງິນອຸດໜູນເສຍຊີວິດຕາມສິດຂອງ ຜົວ ຫຼື ເມຍ ຕື່ມອີກ;
4. ລູກຂອງຜູ້ປະກັນຕົນ, ຜູ້ຮັບອຸດໜູນບໍານານ ຫຼື ຜູ້ຮັບອຸດໜູນເສຍກໍາລັງແຮງງານ ທີ່ມີອາຍຸບໍ່ເກີນສິບແປດປີ ຫາກເສຍຊີວິດ ໃຫ້ຄິດໄລ່ເທົ່າກັບ ສາມເດືອນ ຂອງເງິນປະກັນຕົນ, ເງິນອຸດໜູນບໍານານ ຫຼື ເງິນອຸດໜູນເສຍກໍາລັງແຮງງານ, ໃນກໍລະນີ ລູກ ທີ່ພໍ່ ແລະ ແມ່ ລ້ວນແຕ່ເປັນຜູ້ປະກັນຕົນ ຫາກເສຍຊີວິດຈະໄດ້ຮັບເງິນອຸດໜູນເສຍຊີວິດຕາມເງິນປະກັນຕົນຂອງພໍ່ ຫຼື ແມ່ ເທົ່ານັ້ນ;
5. ຜູ້ໄດ້ຮັບເງິນອຸດໜູນສະມາຊິກຄອບຄົວທີ່ເປັນ ຜົວ ຫຼື ເມຍ, ພໍ່ ຫຼື ແມ່ ແລະ ຜູ້ຮັບອຸດໜູນດູແລ ຫາກເສຍຊີວິດ ຈະໄດ້ຮັບເງິນອຸດໜູນເສຍຊີວິດເທົ່າກັບ ຫົກເດືອນ ແລະ ສໍາລັບລູກ ທີ່ໄດ້ຮັບເງິນອຸດໜູນສະມາຊິກຄອບຄົວ ຈະໄດ້ເທົ່າກັບ ສາມເດືອນ ຂອງເງິນອຸດໜູນຜູ້ກ່ຽວ.

## ໝວດທີ 8
## ການອຸດໜູນສະມາຊິກຄອບຄົວ

**ມາດຕາ 64 (ປັບປຸງ) ເງື່ອນໄຂຮັບການອຸດໜູນສະມາຊິກຄອບຄົວ**

ຜົວ ຫຼື ເມຍ ແລະ ລູກອາຍຸບໍ່ເກີນ ສິບແປດປີ ຂອງຜູ້ປະກັນຕົນ ຈະໄດ້ຮັບການອຸດໜູນສະມາຊິກຄອບຄົວ ກໍຕໍ່ເມື່ອຜູ້ປະກັນຕົນເສຍຊີວິດ ແລະ ໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມ ຫ້າປີ ຂຶ້ນໄປ.

ສະມາຊິກຄອບຄົວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຜົວ ມີອາຍຸກະສຽນ ຫົກສິບປີ, ເມຍ ຫ້າສິບຫ້າປີ ຂຶ້ນໄປ ນັບແຕ່ວັນຜູ້ປະກັນຕົນເສຍຊີວິດ ທີ່ບໍ່ມີລາຍໄດ້ປົກກະຕິ ແລະ ບໍ່ໄດ້ແຕ່ງດອງໃໝ່ ຫຼື ເປັນຜູ້ເສຍກຳລັງແຮງງານ ທີ່ບໍ່ໄດ້ຮັບເງິນອຸດໜູນໃດໜຶ່ງ ນຳອົງການປະກັນສັງຄົມແຫ່ງຊາດ;

2. ລູກຄີງ, ລູກລ້ຽງ ຫຼື ລູກບຸນທຳທີ່ມີອາຍຸ ສິບແປດປີ ລົງມາ ແລະ ລູກທີ່ເປັນຄົນພິການ ຫຼື ເສຍຈິດ ໃນໄລຍະແຕ່ກຳເນີດ ຫຼື ໄລຍະຫຼັງກຳເນີດ ຫາ ສິບແປດປີ ທີ່ບໍ່ສາມາດເຮັດວຽກ ຫຼື ບໍ່ມີລາຍໄດ້ໃດໜຶ່ງ ຈະໄດ້ຮັບເງິນອຸດໜູນເປັນລາຍເດືອນຕະຫຼອດຊີວິດ. ສ່ວນລູກ ທີ່ມີພໍ່ ແລະ ແມ່ ທັງສອງເປັນຜູ້ປະກັນຕົນໄດ້ເສຍຊີວິດ ຈະໄດ້ຮັບອຸດໜູນສະມາຊິກຄອບຄົວນຳ ພໍ່ ຫຼື ແມ່;

3. ກໍລະນີ ຜູ້ປະກັນຕົນ ເປັນລູກຄົນດຽວ ຫຼື ລູກໂທນ ເປັນຜູ້ເບິ່ງແຍງລ້ຽງດູພໍ່ແມ່ ຫາກເສຍຊີວິດ, ພໍ່ ມີອາຍຸກະສຽນ ຫົກສິບປີ ແລະ ແມ່ມີອາຍຸກະສຽນ ຫ້າສິບຫ້າປີ ຂຶ້ນໄປ ຊຶ່ງບໍ່ມີລາຍໄດ້ປົກກະຕິ ກໍຈະໄດ້ຮັບເງິນອຸດໜູນເປັນລາຍເດືອນຕະຫຼອດຊີວິດ.

**ມາດຕາ 65 (ປັບປຸງ) ການຄິດໄລ່ເງິນອຸດໜູນສະມາຊິກຄອບຄົວ**

ເງິນອຸດໜູນສະມາຊິກຄອບຄົວ ໃຫ້ຄິດໄລ່ເປັນລາຍເດືອນ ດັ່ງນີ້:

1. ຜົວ ຫຼື ເມຍ ຈະໄດ້ຮັບເທົ່າກັບ ສາມສິບ ສ່ວນຮ້ອຍ (30%) ຂອງເງິນປະກັນຕົນ, ເງິນອຸດໜູນບຳນານ ຫຼື ເງິນອຸດໜູນເສຍກຳລັງແຮງງານ ເດືອນສຸດທ້າຍຂອງຜູ້ເສຍຊີວິດ;

2. ລູກ ຈະໄດ້ຮັບຜູ້ລະ ຊາວ ສ່ວນຮ້ອຍ (20%) ຂອງເງິນປະກັນຕົນ, ເງິນອຸດໜູນບຳນານ ຫຼື ເງິນອຸດໜູນເສຍກຳລັງແຮງງານ ເດືອນສຸດທ້າຍຂອງຜູ້ເສຍຊີວິດ, ຖ້າຫາກມີລູກບໍ່ທັນພົ້ນກະສຽນຫຼາຍຄົນນັ້ນເງິນອຸດໜູນລູກ ລວມທັງໝົດບໍ່ໃຫ້ເກີນ ຫົກສິບ ສ່ວນຮ້ອຍ (60%);

3. ພໍ່ ຫຼື ແມ່ ຈະໄດ້ຮັບເທົ່າກັບ ສາມສິບ ສ່ວນຮ້ອຍ (30%) ຂອງເງິນປະກັນຕົນ, ເງິນອຸດໜູນບຳນານ ຫຼື ເງິນອຸດໜູນເສຍກຳລັງແຮງງານ ເດືອນສຸດທ້າຍຂອງຜູ້ເສຍຊີວິດ. ຖ້າຫາກ ພໍ່ ແລະ ແມ່ ລ້ວນແຕ່ໄດ້ຮັບເງິນອຸດໜູນນັ້ນລວມທັງໝົດບໍ່ໃຫ້ເກີນ ຫ້າສິບ ສ່ວນຮ້ອຍ (50%).

ເງິນອຸດໜູນສະມາຊິກຄອບຄົວຂອງ ຜົວ ຫຼື ເມຍ ແລະ ລູກ ໄດ້ຮັບທັງໝົດສູງສຸດບໍ່ໃຫ້ເກີນ ແປດສິບ ສ່ວນຮ້ອຍ (80%) ຂອງເງິນປະກັນຕົນ, ເງິນອຸດໜູນບຳນານ ຫຼື ເງິນອຸດໜູນເສຍກຳລັງແຮງງານ ເດືອນສຸດທ້າຍຂອງຜູ້ເສຍຊີວິດ.

## ໝວດທີ 9
## ການອຸດໜູນວ່າງງານ

**ມາດຕາ 66 (ປັບປຸງ) ເງື່ອນໄຂຮັບການອຸດໜູນວ່າງງານ**

ຜູ້ຮັບການອຸດໜູນວ່າງງານ ມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ໃນໄລຍະ ຊາວສີ່ ເດືອນຄືນຫຼັງ ກ່ອນອອກຈາກວຽກ ຜູ້ກ່ຽວຕ້ອງໄດ້ມອບເງິນສົມທົບສຳລັບການອຸດໜູນວ່າງງານເຂົ້າກອງທຶນປະກັນສັງຄົມ ຢ່າງໜ້ອຍ ສິບສອງເດືອນ ຂຶ້ນໄປ;

2. ວ່າງງານຍ້ອນການລົ້ມລະລາຍ, ຢຸດເຊົາກິດຈະການ ຫຼື ສິ້ນສຸດໂຄງການຊ່ວຍເຫຼືອເພື່ອການພັດທະນາ;

3. ວ່າງງານ ຍ້ອນການຢຸດກິດຈະການຊົ່ວຄາວ ຈາກຜົນກະທົບຂອງໄພພິບັດ;

4. ວ່າງງານ ຍ້ອນຄວາມຕ້ອງການຫຼຸດຈຳນວນແຮງງານ ຫຼື ການລະດົມໃຫ້ອອກຈາກວຽກ;

5. ມີເອກະສານຢັ້ງຢືນ ການອອກວຽກຈາກຫົວໜ່ວຍແຮງງານ ທີ່ກ່ຽວຂ້ອງຢ່າງຖືກຕ້ອງ;

6. ວ່າງງານ ແຕ່ ສາມສິບວັນ ຂຶ້ນໄປ ໂດຍມີການຢັ້ງຢືນ ຈາກພາກສ່ວນທີ່ກ່ຽວຂ້ອງ;

7. ມີສຸຂະພາບແຂງແຮງ ແລະ ສາມາດກັບເຂົ້າສູ່ຕະຫຼາດແຮງງານ.

ສຳລັບ ຜູ້ທີ່ເຄີຍໄດ້ຮັບການອຸດໜູນວ່າງງານແລ້ວ ເມື່ອຜູ້ກ່ຽວໄດ້ກັບເຂົ້າສູ່ວຽກເທື່ອໃໝ່ ຕ້ອງໄດ້ມອບເງິນສົມທົບຕື່ມອີກ ສິບສອງ ເດືອນຂຶ້ນໄປ ຈຶ່ງຈະສາມາດຮັບອຸດໜູນວ່າງງານຄັ້ງໃໝ່.

**ມາດຕາ 67 ການຄິດໄລ່ເງິນອຸດໜູນວ່າງງານ**

ເງິນອຸດໜູນວ່າງງານ ໃຫ້ຄິດໄລ່ ດັ່ງນີ້:

1. ຫົກສິບ ສ່ວນຮ້ອຍ (60%) ຄູນ ເງິນປະກັນຕົນສະເລ່ຍພາຍໃນເວລາ ຫົກເດືອນຄືນຫຼັງກ່ອນການວ່າງງານ;

2. ໄລຍະຮັບເງິນອຸດໜູນວ່າງງານ:

   2.1. ສາມເດືອນ, ຖ້າໄດ້ມອບເງິນສົມທົບແຕ່ ສິບສອງເດືອນ ຫາ ສາມສິບຫົກເດືອນ;

   2.2. ຫົກເດືອນ, ຖ້າໄດ້ມອບເງິນສົມທົບແຕ່ ສາມສິບເຈັດເດືອນ ຫາ ເຈັດສິບສອງເດືອນ;

   2.3. ເກົ້າເດືອນ, ຖ້າໄດ້ມອບເງິນສົມທົບແຕ່ ເຈັດສິບສາມເດືອນ ຫາ ໜຶ່ງຮ້ອຍສີ່ສິບສີ່ເດືອນ;

   2.4. ສິບສອງເດືອນ, ຖ້າໄດ້ມອບເງິນສົມທົບແຕ່ ໜຶ່ງຮ້ອຍສີ່ສິບຫ້າເດືອນ ຂຶ້ນໄປ.

**ມາດຕາ 68 ການແນະນຳການຝຶກອົບຮົມວິຊາຊີບ**

ຜູ້ກຳລັງຮັບການອຸດໜູນວ່າງງານ ຖ້າຫາກມີຄວາມຈຳເປັນ ອົງການປະກັນສັງຄົມແຫ່ງຊາດ ຈະແນະນຳການຝຶກອົບຮົມວິຊາຊີບໃຫ້ຜູ້ກ່ຽວ ຕາມແຕ່ລະກໍລະນີ ໂດຍປະສານສົມທົບກັບສະຖານທີ່ຝຶກອົບຮົມທີ່ກ່ຽວຂ້ອງ.

**ມາດຕາ 69 (ປັບປຸງ) ການແນະນຳອາຊີບ**

ຜູ້ກຳລັງຮັບການອຸດໜູນວ່າງງານ ຈະໄດ້ຮັບການແນະນຳອາຊີບ ແລະ ການສະໜອງຂໍ້ມູນຂ່າວສານ ຈາກສູນບໍລິການຈັດຫາງານ ຫຼື ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ.

**ມາດຕາ 70 ການສິ້ນສຸດການຮັບອຸດໜູນວ່າງງານ**

ການສິ້ນສຸດການຮັບອຸດໜູນວ່າງງານ ມີ ກໍລະນີ ດັ່ງນີ້:

1. ໝົດກຳນົດການຮັບອຸດໜູນວ່າງງານ;
2. ປະຕິເສດການຮັບວຽກໃໝ່ ໂດຍບໍ່ມີເຫດຜົນ;
3. ມີວຽກເຮັດງານທຳໃໝ່;
4. ໄດ້ເສຍຊີວິດ.

## ພາກທີ V
## ກອງທຶນປະກັນສັງຄົມ
### ໝວດທີ 1
### ກອງທຶນປະກັນສັງຄົມ

**ມາດຕາ 71 (ປັບປຸງ) ກອງທຶນປະກັນສັງຄົມ**

ກອງທຶນປະກັນສັງຄົມ ແມ່ນ ກອງທຶນສະສົມເງິນສົມທົບຂອງລັດຖະບານ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ຜູ້ໃຊ້ແຮງງານ, ຜູ້ອອກແຮງງານໃນຫົວໜ່ວຍແຮງງານ, ຜູ້ສະໝັກໃຈ, ຜົນໄດ້ຮັບຈາກການນຳເງິນສະສົມໄປລົງທຶນ ແລະ ແຫຼ່ງອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 72 (ປັບປຸງ) ອົງປະກອບກອງທຶນປະກັນສັງຄົມ**

ກອງທຶນປະກັນສັງຄົມ ປະກອບດ້ວຍ:

1. ກອງທຶນອຸດໜູນປະກັນສຸຂະພາບ;
2. ກອງທຶນອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ;
3. ກອງທຶນອຸດໜູນໄລຍະສັ້ນ ສຳລັບການອຸດໜູນປ່ວຍການ, ອອກລູກ ແລະ ການອຸດໜູນເສຍຊີວິດ;
4. ກອງທຶນອຸດໜູນໄລຍະຍາວ ສຳລັບການອຸດໜູນບຳນານ, ເສຍກຳລັງແຮງງານ ແລະ ການອຸດໜູນສະມາຊິກຄອບຄົວ;
5. ກອງທຶນອຸດໜູນວ່າງງານ.

ແຕ່ລະກອງທຶນອຸດໜູນ ໄດ້ຮັບການແບ່ງອັດຕາສ່ວນເງິນຈາກກອງທຶນປະກັນສັງຄົມ ເພື່ອນຳໃຊ້ເຂົ້າໃນການໃຊ້ຈ່າຍ, ການສະສົມ ແລະ ການຊ່ວຍໜູນຊຶ່ງກັນ ແລະ ກັນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

## ໝວດທີ 2
## ລາຍຮັບຂອງກອງທຶນປະກັນສັງຄົມ

**ມາດຕາ 73 (ປັບປຸງ) ລາຍຮັບຂອງກອງທຶນປະກັນສັງຄົມ**

ລາຍຮັບຂອງກອງທຶນປະກັນສັງຄົມ ມີ ດັ່ງນີ້:

1. ເງິນສົມທົບຂອງລັດຖະບານ, ຜູ້ໃຊ້ແຮງງານ ຫຼື ຫົວໜ່ວຍແຮງງານ;
2. ເງິນສົມທົບ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ຜູ້ອອກແຮງງານໃນຫົວໜ່ວຍແຮງງານ ແລະ ຜູ້ສະໝັກໃຈ;
3. ດອກເບ້ຍ ຫຼື ຜົນປະໂຫຍດທີ່ເກີດຈາກການລົງທຶນ;
4. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ນອກຈາກນີ້ ກໍຍັງມີເງິນຊ່ວຍໜູນຈາກງົບປະມານຂອງລັດ ຕໍ່ຜູ້ຮັບອຸດໜູນເສຍອົງຄະຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບ, ຕໍ່ຜູ້ຮັບອຸດໜູນບຳນານຄືນ ແລະ ລູກຜູ້ຮັບອຸດໜູນບຳນານ.

**ມາດຕາ 74 (ປັບປຸງ) ອັດຕາເງິນສົມທົບ**

ອັດຕາເງິນສົມທົບ ມີ ດັ່ງນີ້:

1. ອັດຕາເງິນສົມທົບຂອງພາກລັດ:

1.1. ລັດຖະບານ ປະກອບເງິນສົມທົບ ເທົ່າກັບ ແປດຈຸດຫ້າ ສ່ວນຮ້ອຍ (8,5%) ຂອງຄັງເງິນເດືອນ;

1.2. ພະນັກງານ-ລັດຖະກອນ, ທະຫານ ແລະ ຕຳຫຼວດ ປະກອບເງິນສົມທົບເປັນລາຍເດືອນ ເທົ່າກັບ ແປດ ສ່ວນຮ້ອຍ (8%) ຂອງເງິນປະກັນຕົນ ຊຶ່ງມີເງິນເດືອນພື້ນຖານຕາມຊັ້ນ, ຂັ້ນເງິນເດືອນ, ເງິນອຸດໜູນປີການ, ເງິນອຸດໜູນຕຳແໜ່ງ ແລະ ເງິນອຸດໜູນວິຊາການອື່ນ ທີ່ມີລັກສະນະຖາວອນ ເຊັ່ນ ເງິນອຸດໜູນອາຊີບຄູ, ເງິນອຸດໜູນຜູ້ປະກອບວິຊາຊີບປິ່ນປົວ, ສຳລັບກຳລັງປະກອບອາວຸດ ມີເງິນໜ້າທີ່ ແລະ ເງິນສົ່ງເສີມກອງທັບ;

1.3. ພະນັກງານ-ລັດຖະກອນ, ທະຫານ ແລະ ຕຳຫຼວດ ທີ່ໄດ້ຮັບການແຕ່ງຕັ້ງໄປປະຈຳການທາງລັດຖະການຢູ່ຕ່າງປະເທດ ຫຼື ໄປສຶກສາຮ່ຳຮຽນໄລຍະຍາວຢູ່ພາຍໃນ ແລະ ຕ່າງປະເທດ ເງິນສົມທົບແມ່ນໃຫ້ຄິດໄລ່ຈາກເງິນເດືອນ ເດືອນສຸດທ້າຍກ່ອນໄປປະຈຳການ ຫຼື ໄປສຶກສາຮ່ຳຮຽນດັ່ງກ່າວ.

2. ອັດຕາເງິນສົມທົບຂອງພາກວິສາຫະກິດ ແລະ ຜູ້ສະໝັກໃຈ:

2.1. ຜູ້ໃຊ້ແຮງງານ ຫຼື ຫົວໜ່ວຍແຮງງານ ປະກອບເງິນສົມທົບເປັນລາຍເດືອນ ເທົ່າກັບ ຫົກ ສ່ວນຮ້ອຍ (6%) ຂອງເງິນປະກັນຕົນຜູ້ອອກແຮງງານແຕ່ລະຄົນ ຊຶ່ງລວມມີເງິນເດືອນພື້ນຖານ, ເງິນຕາມຜະລິດຕະພັນ, ເງິນລ່ວງເວລາ ແລະ ເງິນອື່ນທີ່ແຈ້ງເສຍອາກອນລາຍໄດ້ ໂດຍຖືເອົາຄ່າແຮງງານຂັ້ນຕ່ຳສຸດ ຫາເພດານເງິນເດືອນປະກັນຕົນສູງສຸດເປັນຫຼັກຕັ້ງໃນການຄິດໄລ່;

2.2. ຜູ້ອອກແຮງງານໃນຫົວໜ່ວຍແຮງງານ ປະກອບເງິນສົມທົບເປັນລາຍເດືອນ ເທົ່າກັບ ຫ້າຈຸດຫ້າ ສ່ວນຮ້ອຍ (5,5%) ຂອງເງິນປະກັນຕົນ ຊຶ່ງລວມມີເງິນເດືອນພື້ນຖານ, ເງິນຕາມຜະລິດຕະພັນ,

ເງິນລ່ວງເວລາ ແລະ ເງິນອື່ນທີ່ແຈ້ງເສຍອາກອນລາຍໄດ້ ໂດຍຖືເອົາຄ່າແຮງງານຂັ້ນຕ່ຳສຸດ ຫາ ເພດານເງິນປະກັນຕົນສູງສຸດເປັນຕົວຕັ້ງໃນການຄິດໄລ່. ໃນກໍລະນີຜູ້ອອກແຮງງານ ຫາກໄດ້ຮັບຄ່າແຮງງານເປັນລາຍວັນ ຫຼື ສັບປະດາ ໃຫ້ຄິດໄລ່ລາຍຮັບຂອງຜູ້ກ່ຽວເປັນລາຍເດືອນ ໂດຍໃຫ້ນັບເອົາຈຳນວນເງິນທັງໝົດທີ່ຜູ້ກ່ຽວໄດ້ຮັບ;

2.3. ຜູ້ສະໝັກໃຈ ປະກອບເງິນສົມທົບ ເປັນລາຍເດືອນ ເທົ່າກັບ ເກົ້າ ສ່ວນຮ້ອຍ (9%) ໂດຍເລືອກເອົາເງິນປະກັນຕົນຂອງຕົນເອງ ຕາມການກຳນົດລະຫວ່າງຄ່າແຮງງານຂັ້ນຕ່ຳສຸດ ຂອງຜູ້ອອກແຮງງານ ຫາ ເພດານເງິນເດືອນປະກັນຕົນສູງສຸດເປັນຕົວຕັ້ງໃນການຄິດໄລ່.

ຜູ້ຮັບບຳນານ, ຜູ້ເສຍກຳລັງແຮງງານ, ຜູ້ຮັບອຸດໜູນສະມາຊິກຄອບຄົວ ແລະ ຜູ້ຮັບອຸດໜູນຜູ້ດູແລ ປະກອບເງິນສົມທົບ ເຄິ່ງໜຶ່ງ ຂອງອັດຕາສ່ວນເງິນກອງທຶນອຸດໜູນປິ່ນປົວສຸຂະພາບ, ຍົກເວັ້ນຜູ້ດູແລທີ່ເປັນສະມາຊິກຄອບຄົວຂອງຜູ້ປະກັນຕົນ.

**ມາດຕາ 75 (ໃໝ່) ການມອບເງິນສົມທົບ**

ການມອບເງິນສົມທົບໃຫ້ປະຕິບັດ ດັ່ງນີ້:

1. ການມອບເງິນສົມທົບຂອງພາກລັດ:

1.1. ກະຊວງການເງິນໃນນາມລັດຖະບານ ມອບເງິນສົມທົບ ເປັນແຕ່ລະງວດ ເທົ່າກັບ ແປດຈຸດຫ້າ ສ່ວນຮ້ອຍ (8,5%) ເຂົ້າບັນຊີເງິນຝາກຂອງອົງການປະກັນສັງຄົມແຫ່ງຊາດ ຢູ່ຄັງເງິນແຫ່ງຊາດ;

1.2. ການຈັດຕັ້ງທີ່ກ່ຽວຂ້ອງ ມອບເງິນສົມທົບຂອງພະນັກງານ-ລັດຖະກອນ ເປັນລາຍເດືອນ ເທົ່າກັບ ແປດ ສ່ວນຮ້ອຍ (8%) ເຂົ້າບັນຊີເງິນຝາກຂອງອົງການປະກັນສັງຄົມແຫ່ງຊາດ ຢູ່ຄັງເງິນແຫ່ງຊາດ ຫຼື ຄັງເງິນແຫ່ງຊາດປະຈຳ ແຂວງ, ນະຄອນຫຼວງ, ສ່ວນເງິນສົມທົບ ແປດ ສ່ວນຮ້ອຍ (8%) ຂອງທະຫານ ແລະ ຕຳຫຼວດ ໃຫ້ມອບເຂົ້າບັນຊີປະກັນສັງຄົມຂອງສອງກຳລັງດັ່ງກ່າວ;

2. ການມອບເງິນສົມທົບຂອງວິສາຫະກິດ ແລະ ຜູ້ສະໝັກໃຈ:

2.1. ຜູ້ໃຊ້ແຮງງານຂຶ້ນບັນຊີເງິນເດືອນຂອງຜູ້ອອກແຮງງານ ແລະ ຄິດໄລ່ເງິນສົມທົບ ຫົກ ສ່ວນຮ້ອຍ (6%) ຂອງຫົວໜ່ວຍແຮງງານ ແລະ ຫ້າຈຸດຫ້າ ສ່ວນຮ້ອຍ (5,5%) ຂອງຜູ້ອອກແຮງງານເປັນລາຍເດືອນ ແລ້ວມອບເຂົ້າບັນຊີເງິນຝາກຂອງອົງການປະກັນສັງຄົມແຫ່ງຊາດຢູ່ທະນາຄານ ແລະ ແຈ້ງລາຍລະອຽດບັນຊີເງິນສົມທົບຕໍ່ອົງການປະກັນສັງຄົມແຫ່ງຊາດ;

2.2. ຜູ້ສະໝັກໃຈມອບເງິນສົມທົບ ເກົ້າ ສ່ວນຮ້ອຍ (9%) ຂອງເງິນປະກັນຕົນເປັນລາຍເດືອນ ຫຼື ລ່ວງໜ້າ ແຕ່ບໍ່ເກີນອາຍຸຂອງສັນຍາ ເຂົ້າບັນຊີເງິນຝາກຢູ່ທະນາຄານ ຫຼື ຈ່າຍເປັນເງິນສົດຢູ່ອົງການປະກັນສັງຄົມແຫ່ງຊາດ;

2.3. ຫົວໜ່ວຍແຮງງານ ຫຼື ຜູ້ສະໝັກໃຈ ສາມາດມອບເງິນສົມທົບເປັນເງິນສົດ ຊຶ່ງມີຈຳນວນ ບໍ່ເກີນຫ້າລ້ານກີບ ຢູ່ອົງການປະກັນສັງຄົມແຫ່ງຊາດ ໂດຍມີການຈົດຮັບ-ຈົດຈ່າຍ ຕາມລະບຽບການ.

ສຳລັບຫົວໜ່ວຍແຮງງານ ສາມາດຢຸດມອບເງິນສົມທົບໄດ້ ໃນກໍລະນີຢຸດກິດຈະການ, ລົ້ມລະລາຍ ຫຼື ໄດ້ຮັບຜົນກະທົບຈາກໄພພິບັດ ໂດຍມີການຢັ້ງຢືນຢ່າງຖືກຕ້ອງ.

ເງິນສົມທົບເພື່ອປິ່ນປົວສຸຂະພາບ ຂອງຜູ້ຮັບອຸດໜູນບຳນານ, ຜູ້ຮັບອຸດໜູນເສຍກຳລັງແຮງງານ, ຜູ້ຮັບອຸດໜູນຜູ້ດູແລ ແລະ ຜູ້ຮັບອຸດໜູນສະມາຊິກຄອບຄົວ ໃຫ້ຫັກໂດຍກົງຈາກເງິນອຸດໜູນທີ່ກ່ຽວຂ້ອງ ຜ່ານລະບົບບັນຊີຂອງອົງການປະກັນສັງຄົມແຫ່ງຊາດ ຢູ່ຄັງເງິນແຫ່ງຊາດ ຫຼື ທະນາຄານ.

**ມາດຕາ 76 (ໃໝ່) ການມອບເງິນຊ່ວຍໜູນຈາກລັດຖະບານ ສຳລັບກຸ່ມເປົ້າໝາຍເສຍອົງຄະ ຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບ, ຜູ້ຮັບອຸດໜູນບຳນານຄືນ ແລະ ລູກຜູ້ຮັບອຸດໜູນບຳນານ**

ອົງການປະກັນສັງຄົມແຫ່ງຊາດ ສັງລວມແຜນງົບປະມານລາຍຮັບເງິນຊ່ວຍໜູນ ສຳລັບຜູ້ຮັບອຸດໜູນເສຍອົງຄະຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບ, ຜູ້ຮັບອຸດໜູນບຳນານຄືນ ແລະ ລູກຜູ້ຮັບອຸດໜູນບຳນານ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອສະເໜີກະຊວງການເງິນ ພິຈາລະນາ ແລ້ວໂອນເຂົ້າບັນຊີເງິນຝາກຂອງອົງການປະກັນສັງຄົມແຫ່ງຊາດ ຢູ່ຄັງເງິນແຫ່ງຊາດ.

**ມາດຕາ 77 (ໃໝ່) ການດັດແກ້ອັດຕາເງິນສົມທົບ ແລະ ການກຳນົດເພດານເງິນເດືອນປະກັນຕົນສູງສຸດ**

ການດັດແກ້ອັດຕາເງິນສົມທົບ ແມ່ນ ການທົບທວນຄືນ ອັດຕາເງິນສົມທົບ ຕາມການຄຳນວນທາງດ້ານຄະນິດສາດປະກັນໄພ ໃນທຸກ ຫ້າປີ ເພື່ອໃຫ້ສອດຄ່ອງກັບການເໜັງຕີງທາງດ້ານເສດຖະກິດ-ສັງຄົມຂອງປະເທດ.

ການກຳນົດເພດານເງິນເດືອນປະກັນຕົນສູງສຸດ ໃຫ້ປະຕິບັດບົນພື້ນຖານ ການເໜັງຕີງທາງດ້ານເສດຖະກິດ ແລະ ຄວາມຈຳເປັນຕາມການຄຳນວນທາງດ້ານຄະນິດສາດປະກັນໄພ.

ສຳລັບ ການກຳນົດພື້ນຖານເງິນປະກັນຕົນຕ່ຳສຸດ ໃຫ້ອີງໃສ່ຄ່າແຮງງານຂັ້ນຕ່ຳສຸດ ທີ່ລັດປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 3
## ການນຳໃຊ້ກອງທຶນປະກັນສັງຄົມ

**ມາດຕາ 78 (ປັບປຸງ) ການນຳໃຊ້ກອງທຶນປະກັນສັງຄົມ**

ກອງທຶນປະກັນສັງຄົມນຳໃຊ້ ດັ່ງນີ້:

1. ການອຸດໜູນປະກັນສັງຄົມ;
2. ການບໍລິຫານປົກກະຕິ;
3. ໂຄງການລົງທຶນ ໃສ່ໂຄງລ່າງພື້ນຖານ ແລະ ການພັດທະນາວຽກງານປະກັນສັງຄົມ.

ການນຳໃຊ້ເງິນກອງທຶນປະກັນສັງຄົມ ສຳລັບການອຸດໜູນປະກັນສັງຄົມຂອງພາກໃດ ໃຫ້ນຳໃຊ້ລາຍຮັບຂອງພາກນັ້ນ. ສຳລັບ ລາຍຈ່າຍບໍລິຫານປົກກະຕິ, ໂຄງການລົງທຶນໃສ່ໂຄງລ່າງພື້ນຖານ ແລະ ການພັດທະນາວຽກງານປະກັນສັງຄົມ ໃຫ້ນຳໃຊ້ເງິນລາຍໄດ້ຈາກການລົງທຶນຂອງກອງທຶນ ໂດຍໃຫ້ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ. ໃນກໍລະນີລາຍໄດ້ຈາກກອງທຶນບໍ່ພຽງພໍ ໃຫ້ຂຶ້ນແຜນນຳໃຊ້ງົບປະມານຂອງລັດປະຈຳປີ.

ສຳລັບ ແຜນງົບປະມານລາຍຮັບ-ລາຍຈ່າຍ ປະຈຳປີ ທັງໝົດຂອງກອງທຶນປະກັນສັງຄົມ ສະພາບໍລິຫານ ເປັນຜູ້ຄົ້ນຄວ້າ ແລະ ນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາ ຕົກລົງ.

ການສະຫຼຸບ ລາຍງານ ລາຍຮັບ-ລາຍຈ່າຍ ຂອງກອງທຶນ ໃນແຕ່ລະປີ ຕ້ອງໄດ້ຮັບການກວດສອບ ແລະ ຢັ້ງຢືນຈາກອົງການກວດສອບແຫ່ງລັດ, ພ້ອມທັງ ເຜີຍແຜ່ຕໍ່ສັງຄົມ.

ສຳລັບການນຳໃຊ້ລາຍໄດ້ຈາກການລົງທຶນຂອງກອງທຶນປະກັນສັງຄົມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 79 (ໃໝ່) ການເບີກຈ່າຍງົບປະມານ**

ການເບີກຈ່າຍງົບປະມານໃຫ້ປະຕິບັດ ດັ່ງນີ້:

1. ການເບີກຈ່າຍງົບປະມານ ຕ້ອງບົນພື້ນຖານແຜນລາຍຈ່າຍງົບປະມານ ທີ່ໄດ້ຜ່ານການພິຈາລະນາຈາກ ສະພາບໍລິຫານ ແລະ ຮັບຮອງຈາກລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ;

2. ການເບີກຈ່າຍງົບປະມານ ຂອງກອງທຶນປະກັນສັງຄົມພາກລັດ ໃຫ້ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນນາມຜູ້ສັ່ງການເປັນຜູ້ອະນຸມັດຈາກບັນຊີຮັບເຂົ້າບັນຊີຈ່າຍຂອງອົງການປະກັນສັງຄົມແຫ່ງຊາດ ຢູ່ຄັງເງິນແຫ່ງຊາດ ແລະ ໃຫ້ຜູ້ອຳນວຍການໃນນາມຜູ້ຖືກມອບສິດ ເປັນຜູ້ສັ່ງຈ່າຍຈາກບັນຊີຈ່າຍ ສຳລັບການອຸດໜູນປະກັນສັງຄົມປະເພດຕ່າງໆ, ການບໍລິຫານປົກກະຕິ ແລະ ໂຄງການລົງທຶນ;

3. ການເບີກຈ່າຍງົບປະມານຂອງກອງທຶນປະກັນສັງຄົມ ພາກວິສາຫະກິດ ແລະ ຜູ້ສະໝັກໃຈ ໃຫ້ຜູ້ອຳນວຍການໃນນາມຜູ້ຖືກມອບສິດເປັນຜູ້ສັ່ງຈ່າຍຈາກບັນຊີເງິນຝາກທະນາຄານ ສຳລັບການອຸດໜູນປະກັນສັງຄົມການບໍລິຫານປົກກະຕິ ແລະ ໂຄງການລົງທຶນ ຕາມແຜນການທີ່ສະພາບໍລິຫານຮັບຮອງ;

4. ການຄິດໄລ່ການເບີກຈ່າຍຕ່າງໆ ໃຫ້ປະຕິບັດຕາມກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 80 (ໃໝ່) ການບັນຊີ ແລະ ປີງົບປະມານ**

ອົງການປະກັນສັງຄົມແຫ່ງຊາດ ຕ້ອງມີລະບົບບັນຊີ ແລະ ສາລະບານງົບປະມານສະເພາະ ໂດຍຜ່ານການຮັບຮອງຈາກ ກະຊວງການເງິນ ເພື່ອຄຸ້ມຄອງລາຍຮັບ-ລາຍຈ່າຍ.

ລາຍຮັບ-ລາຍຈ່າຍ ງົບປະມານທັງໝົດ ຂອງອົງການປະກັນສັງຄົມແຫ່ງຊາດ ຕ້ອງລວມສູນເປັນເອກະພາບ ໂດຍໃຫ້ເປີດບັນຊີຮັບ ແລະ ບັນຊີຈ່າຍ ຢູ່ຄັງເງິນແຫ່ງຊາດ, ຄັງເງິນແຫ່ງຊາດປະຈຳ ແຂວງ, ນະຄອນຫຼວງ ຫຼື ທະນາຄານ ທີ່ຕັ້ງຢູ່ ສປປ ລາວ.

ປີງົບປະມານ ແລະ ການສະຫຼຸບ ລາຍງານ ຂອງອົງການປະກັນສັງຄົມແຫ່ງຊາດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

## ໝວດທີ 4
## ການສະສົມທຶນ ແລະ ການລົງທຶນ

**ມາດຕາ 81 (ປັບປຸງ) ການສະສົມທຶນ**

ການສະສົມທຶນ ແມ່ນ ການເກັບທ້ອນເງິນທີ່ເຫຼືອຈາກການນຳໃຊ້ລາຍຮັບຕ່າງໆ ຂອງອົງການປະກັນສັງຄົມແຫ່ງຊາດ ໄວ້ຢູ່ຄັງເງິນແຫ່ງຊາດ ຫຼື ທະນາຄານ ເພື່ອຮອງຮັບການຈ່າຍເງິນອຸດໜູນປະກັນສັງຄົມໃນໄລຍະຍາວ.

**ມາດຕາ 82 (ໃໝ່) ການລົງທຶນ**

ອົງການປະກັນສັງຄົມແຫ່ງຊາດ ສາມາດນຳໃຊ້ເງິນສະສົມ ຂອງກອງທຶນປະກັນສັງຄົມ ເຂົ້າໃນການລົງທຶນດ້ວຍຮູບການທີ່ເໝາະສົມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 73 ຂອງກົດໝາຍສະບັບນີ້ ເພື່ອໃຫ້ກອງທຶນເຕີບໃຫຍ່ຂະຫຍາຍຕົວ, ມີຄວາມເຂັ້ມແຂງ ແລະ ຍືນຍົງ. ການລົງທຶນຕ້ອງຮັບປະກັນຄວາມໝັ້ນຄົງ ແລະ ບໍ່ໃຫ້ມີຄວາມສ່ຽງ ກ່ຽວກັບຕົ້ນທຶນ ແລະ ຜົນຮັບຈາກການລົງທຶນ ໂດຍມີການຮັບຮອງຂອງສະພາບໍລິຫານ.

ການນຳໃຊ້ເງິນສະສົມຂອງກອງທຶນປະກັນສັງຄົມ ເຂົ້າໃນການລົງທຶນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VI
## ສະພາບໍລິຫານ ແລະ ອົງການປະກັນສັງຄົມແຫ່ງຊາດ

**ມາດຕາ 83 (ໃໝ່) ສະພາບໍລິຫານ**

ສະພາບໍລິຫານ ແມ່ນ ການຈັດຕັ້ງບໍ່ປະຈຳການ, ຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ມີພາລະບົດບາດເປັນທີ່ປຶກສາ ແລະ ຄຸ້ມຄອງກອງທຶນປະກັນສັງຄົມໃນການຈັດຕັ້ງປະຕິບັດ ແລະ ປະສານສົມທົບກັບບັນດາກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການອື່ນ ທີ່ກ່ຽວຂ້ອງ.

ສະພາບໍລິຫານ ປະກອບດ້ວຍ ຕົວແທນສາມຝ່າຍ ຈາກລັດຖະບານ, ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ຊຶ່ງມີອົງການປະກັນສັງຄົມແຫ່ງຊາດ ເປັນກອງເລຂາ.

**ມາດຕາ 84 (ປັບປຸງ) ໂຄງປະກອບຂອງສະພາບໍລິຫານ**

ສະພາບໍລິຫານ ປະກອບດ້ວຍ:

1. ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນປະທານ;
2. ຮອງປະທານ ສູນກາງສະຫະພັນກຳມະບານລາວ ເປັນຮອງປະທານ;
3. ຮອງປະທານ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ເປັນຮອງປະທານ;
4. ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
5. ຮອງລັດຖະມົນຕີ ກະຊວງການເງິນ ເປັນກຳມະການ;
6. ຮອງລັດຖະມົນຕີ ກະຊວງສາທາລະນະສຸກ ເປັນກຳມະການ;
7. ຮອງຫົວໜ້າ ກົມໃຫຍ່ການເມືອງກອງທັບ ກະຊວງປ້ອງກັນປະເທດ ເປັນກຳມະການ;
8. ຮອງຫົວໜ້າ ກົມໃຫຍ່ການເມືອງ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;
9. ຕາງໜ້າຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ຢ່າງໜ້ອຍຝ່າຍລະສອງທ່ານ ເປັນກຳມະການ;

10. ຜູ້ອຳນວຍການ ອົງການປະກັນສັງຄົມແຫ່ງຊາດ ເປັນກຳມະການ ທັງເປັນທີ່ວໜ້າກອງເລຂາ.

ໂຄງປະກອບຂອງສະພາບໍລິຫານ ອາດມີການປັບປຸງໃຫ້ແທດເໝາະກັບສະພາບຕົວຈິງ ໃນແຕ່ລະໄລຍະ.

**ມາດຕາ 85 (ປັບປຸງ) ສິດ ແລະ ໜ້າທີ່ຂອງສະພາບໍລິຫານ**

ສະພາບໍລິຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ປະກອບຄຳເຫັນ ຕໍ່ຮ່າງຍຸດທະສາດ ແລະ ແຜນປະຕິບັດງານ ກ່ຽວກັບວຽກງານປະກັນສັງຄົມ;
2. ພິຈາລະນາ ແລະ ຮັບຮອງ ກົດລະບຽບພາຍໃນ ຂອງອົງການປະກັນສັງຄົມແຫ່ງຊາດ;
3. ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານຂອງອົງການປະກັນສັງຄົມແຫ່ງຊາດ;
4. ຄົ້ນຄວ້າ ແລະ ພິຈາລະນາ ແຫຼ່ງລາຍຮັບ ແລະ ລາຍຈ່າຍ ຂອງອົງການປະກັນສັງຄົມແຫ່ງຊາດ;
5. ພິຈາລະນາ ແລະ ຮັບຮອງຮູບແບບການລົງທຶນຂອງກອງທຶນປະກັນສັງຄົມ ເພື່ອຮັບປະກັນໃຫ້ກອງທຶນເຕີບໃຫຍ່ຂະຫຍາຍຕົວ, ມີຄວາມເຂັ້ມແຂງ ແລະ ຍືນຍົງ;
6. ຄົ້ນຄວ້າ ອັດຕາເງິນສົມທົບ, ເພດານເງິນປະກັນຕົນ, ລະດັບການອຸດໜູນ ແລະ ການຈັດແບ່ງອັດຕາສ່ວນ ຂອງແຕ່ລະກອງທຶນອຸດໜູນປະກັນສັງຄົມ ໃຫ້ສອດຄ່ອງກັບຄວາມຕ້ອງການໃນແຕ່ລະໄລຍະ ແລ້ວນຳສະເໜີຕໍ່ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ພິຈາລະນາຮັບຮອງ;
7. ພິຈາລະນາ, ຮັບຮອງບົດສະຫຼຸບ ແລະ ແຜນການເຄື່ອນໄຫວວຽກງານ ແລະ ງົບປະມານຂອງອົງການປະກັນສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 86 (ປັບປຸງ) ກອງປະຊຸມສະພາບໍລິຫານ**

ກອງປະຊຸມສາມັນ ຂອງສະພາບໍລິຫານ ຈັດຂຶ້ນ ສາມເດືອນ ຕໍ່ຄັ້ງ ເພື່ອພິຈາລະນາ ແລະ ຕົກລົງບັນຫາສຳຄັນຕ່າງໆ ກ່ຽວກັບວຽກງານປະກັນສັງຄົມ.

ໃນກໍລະນີຈຳເປັນ ແລະ ຮີບດ່ວນ ກໍສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ ຕາມການຮຽກໂຮມຂອງປະທານສະພາບໍລິຫານ ຫຼື ຕາມການສະເໜີຂອງຜູ້ອຳນວຍການອົງການປະກັນສັງຄົມແຫ່ງຊາດ.

ກອງປະຊຸມສາມັນ ຂອງສະພາບໍລິຫານ ຈະເປີດຂຶ້ນໄດ້ ກໍຕໍ່ເມື່ອມີສະມາຊິກສະພາບໍລິຫານເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກທັງໝົດ.

ມະຕິຂອງກອງປະຊຸມ ຈະມີຜົນສັກສິດ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສະມາຊິກທີ່ເຂົ້າຮ່ວມ.

ໃນກໍລະນີ ທີ່ມີຄະແນນສຽງເທົ່າກັນນັ້ນ ຄະແນນສຽງຂອງປະທານເປັນສຽງຊີ້ຂາດ.

**ມາດຕາ 87 (ໃໝ່) ອົງການປະກັນສັງຄົມແຫ່ງຊາດ**

ອົງການປະກັນສັງຄົມແຫ່ງຊາດ ແມ່ນ ການຈັດຕັ້ງວິຊາການໜຶ່ງ ທີ່ສັງກັດຢູ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ເປັນຫົວໜ່ວຍການເງິນສະເພາະ, ມີສາລະບານບັນຊີຕ່າງຫາກ ເພື່ອໃຫ້ສາມາດ ກຸ້ມຕົນເອງທາງດ້ານງົບປະມານເທື່ອລະກ້າວ, ມີພາລະບົດບາດເປັນເສນາທິການໃຫ້ແກ່ສະພາບໍລິຫານ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງວຽກງານປະກັນສັງຄົມ.

ອົງການປະກັນສັງຄົມແຫ່ງຊາດ ຂຽນອັກສອນຫຍໍ້ວ່າ "ອປຊ".

**ມາດຕາ 88 (ໃໝ່) ໂຄງປະກອບການຈັດຕັ້ງຂອງອົງການປະກັນສັງຄົມແຫ່ງຊາດ**

ອົງການປະກັນສັງຄົມແຫ່ງຊາດ ມີກົງຈັກການຈັດຕັ້ງຂອງຕົນ ນັບແຕ່ສູນກາງລົງຮອດທ້ອງຖິ່ນ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກການຈັດຕັ້ງແຕ່ລະຂັ້ນ ໄດ້ກຳນົດໄວ້ໃນລະບຽບ ການຕ່າງຫາກ.

**ມາດຕາ 89 (ໃໝ່) ສິດ ແລະ ໜ້າທີ່ຂອງອົງການປະກັນສັງຄົມແຫ່ງຊາດ**

ອົງການປະກັນສັງຄົມແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ລະບຽບການ ກ່ຽວກັບວຽກງານປະກັນສັງຄົມ ໃຫ້ແກ່ສັງຄົມຢ່າງເລິກເຊິ່ງ ແລະ ກວ້າງຂວາງ;

3. ຄຸ້ມຄອງບໍລິຫານ ແລະ ພັດທະນາວຽກງານປະກັນສັງຄົມ ໃຫ້ມີຄວາມທັນສະໄໝ ແລະ ຍືນຍົງ;

4. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນງົບປະມານລາຍຮັບ-ລາຍຈ່າຍ ກ່ຽວກັບວຽກງານປະ ກັນສັງຄົມ ຕາມກົດໝາຍ;

5. ຄົ້ນຄວ້າ ວິທະຍາສາດທາງດ້ານປະກັນສັງຄົມ, ການຄິດໄລ່ ແລະ ວິໄຈຂໍ້ມູນທາງດ້ານສະ ຖິຕິປະກັນໄພ;

6. ສະເໜີປັບປຸງອັດຕາເງິນສົມທົບ, ເພດານເງິນປະກັນຕົນ, ລະດັບການອຸດໜູນ ແລະ ອັດ ຕາສ່ວນຂອງແຕ່ລະກອງທຶນອຸດໜູນ ໃຫ້ສອດຄ່ອງກັບລະດັບການອຸດໜູນປະກັນສັງຄົມປະເພດຕ່າງໆ ໃນ ແຕ່ລະໄລຍະ;

7. ຄົ້ນຄວ້າ, ພິຈາລະນາ ແລະ ຈ່າຍເງິນອຸດໜູນປະເພດຕ່າງໆ ໃຫ້ແກ່ສະມາຊິກໃຫ້ຖືກຕ້ອງ ແລະ ວ່ອງໄວ;

8. ຕິດຕາມ ແລະ ຊຸກຍູ້ການສະໜອງບໍລິການປິ່ນປົວສຸຂະພາບ ໃຫ້ແກ່ຜູ້ປະກັນຕົນ ແລະ ສະ ມາຊິກຄອບຄົວຂອງຜູ້ກ່ຽວ ໂດຍປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງ;

9. ຮັບ, ຄົ້ນຄວ້າ ແລະ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານປະກັນສັງຄົມ;

10. ເກັບກຳ, ສັງລວມຂໍ້ມູນ, ສະຖິຕິ ແລະ ພັດທະນາຖານຂໍ້ມູນ ເພື່ອຮັບໃຊ້ວຽກງານປະກັນສັງຄົມ;

11. ຄົ້ນຄວ້າ, ກຳນົດຕຳແໜ່ງງານ ແລະ ສ້າງແຜນພັດທະນາບຸກຄະລາກອນໃນແຕ່ລະໄລຍະ ແລະ ສະເໜີຕົວເລກພະນັກງານໃໝ່ຕາມຄວາມຈຳເປັນຂອງຕຳແໜ່ງງານ ໃນແຕ່ລະປີ;

12. ຈັດຕັ້ງປະຕິບັດແຜນງົບປະມານລາຍຮັບ-ລາຍຈ່າຍຂອງຕົນ ຕາມການເຫັນດີຂອງສະພາບໍລິຫານ ແລະ ການອະນຸມັດຂອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;

13. ສະເໜີສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກກົງຈັກ, ຕຳແໜ່ງງານຂອງອົງການຕົນຕໍ່ຂັ້ນເທິງພິຈາລະນາ;

14. ສະເໜີແຕ່ງຕັ້ງ, ປົດຕຳແໜ່ງ, ຍົກຍ້າຍ, ສັບຊ້ອນ, ຍ້ອງຍໍ ແລະ ລົງວິໄນພະນັກງານຂອງຕົນ;

15. ຊຸກຍູ້, ຕິດຕາມ ແລະ ກວດກາ ການຂະຫຍາຍອັດຕາການປົກຄຸມປະກັນສັງຄົມໃຫ້ກວມເອົາກຸ່ມເປົ້າໝາຍຕ່າງໆ ຢ່າງກວ້າງຂວາງ;

16. ເກັບກຳຂໍ້ມູນກຸ່ມເປົ້າໝາຍ ແລະ ຂະຫຍາຍຜູ້ປະກັນຕົນຂອງລະບົບປະກັນສັງຄົມ ຈາກພາກສ່ວນອື່ນທີ່ກ່ຽວຂ້ອງ;

17. ຈັດກອງປະຊຸມລະດັບຕ່າງໆ ກ່ຽວກັບວຽກງານປະກັນສັງຄົມ;

18. ອອກແຈ້ງການ ກ່ຽວກັບວຽກງານປະກັນສັງຄົມ, ສະເໜີປັບປຸງ ຫຼື ຍົກເລີກລະບຽບການຕ່າງໆ ທີ່ບໍ່ສອດຄ່ອງກັບວຽກງານປະກັນສັງຄົມ;

19. ພົວພັນ, ຮ່ວມມືກັບພາກສ່ວນຕ່າງໆ ທັງພາຍໃນ, ຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານປະກັນສັງຄົມ ຕາມການມອບໝາຍຂອງຂັ້ນເທິງ;

20. ສະຫຼຸບ, ປະເມີນຜົນ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານປະກັນສັງຄົມ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

21. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ພາກທີ VII
## ການຂຶ້ນທະບຽນປະກັນສັງຄົມ
## ແລະ ການພິຈາລະນາການອຸດໜູນປະກັນສັງຄົມ
### ໝວດທີ 1
### ການຂຶ້ນທະບຽນປະກັນສັງຄົມ

**ມາດຕາ 90 (ປັບປຸງ) ການຂຶ້ນທະບຽນປະກັນສັງຄົມ**

ການຂຶ້ນທະບຽນປະກັນສັງຄົມ ໃຫ້ປະຕິບັດ ດັ່ງນີ້:

1. ພະນັກງານ-ລັດຖະກອນ, ຜູ້ອອກແຮງງານ ລວມທັງຜູ້ອອກແຮງງານຕ່າງປະເທດ, ຜູ້ສະໝັກໃຈ, ຜູ້ຮັບອຸດໜູນບໍານານ, ຜູ້ຮັບອຸດໜູນເສຍອົງຄະ ຈາກກໍາລັງປະກອບອາວຸດ ແລະ ຜູ້ຮັບອຸດໜູນຜູ້ດູແລ ຕ້ອງຂຶ້ນທະບຽນປະກັນສັງຄົມ ຢູ່ອົງການປະກັນສັງຄົມແຫ່ງຊາດ ຕາມການແບ່ງຂັ້ນຄຸ້ມຄອງ;

2. ຫົວໜ່ວຍແຮງງານ ທີ່ມີຜູ້ອອກແຮງງານແຕ່ ໜຶ່ງຄົນຂຶ້ນໄປ ຕ້ອງຂຶ້ນທະບຽນປະກັນສັງຄົມ ນໍາອົງການປະກັນສັງຄົມແຫ່ງຊາດ ຕາມການແບ່ງຂັ້ນຄຸ້ມຄອງ;

3. ທຸກອົງການຈັດຕັ້ງຂອງລັດ ແລະ ຜູ້ໃຊ້ແຮງງານ ມີໜ້າທີ່ປະກອບ ແລະ ຮັບໃຮມບັນດາແບບພິມການຂຶ້ນທະບຽນປະກັນສັງຄົມ ພ້ອມດ້ວຍເອກະສານຢັ້ງຢືນກ່ຽວກັບການແຈ້ງຂໍ້ມູນຕ່າງໆໃຫ້ຄົບຖ້ວນຕາມທີ່ໄດ້ກໍານົດໄວ້.

ໃນກໍລະນີ ຜູ້ປະກັນຕົນໄດ້ຂຶ້ນທະບຽນມາກ່ອນແລ້ວ ຫາກມີການຍົກຍ້າຍບ່ອນເຮັດວຽກ ຕ້ອງແຈ້ງເລກບັດປະກັນສັງຄົມຂອງຕົນ ໃຫ້ອົງການປະກັນສັງຄົມແຫ່ງຊາດ ເພື່ອສະສົມໄລຍະປະກັນຕົນ.

### ມາດຕາ 91 (ປັບປຸງ) ເອກະສານຂຶ້ນທະບຽນປະກັນສັງຄົມ

ເອກະສານຂຶ້ນທະບຽນປະກັນສັງຄົມ ມີ ດັ່ງນີ້:

1. ໃບແຈ້ງຂໍ້ມູນສ່ວນຕົວ ຂອງຫົວໜ່ວຍແຮງງານ, ພະນັກງານ-ລັດຖະກອນ, ຜູ້ອອກແຮງງານ, ຜູ້ສະໝັກໃຈ, ຜູ້ຮັບອຸດໜູນບໍານານ ແລະ ຜູ້ຮັບອຸດໜູນເສຍອົງຄະ ຈາກກໍາລັງປະກອບອາວຸດ, ຜູ້ຮັບອຸດໜູນຜູ້ດູແລ ຕາມແບບພິມ ທີ່ໄດ້ກໍານົດໄວ້;

2. ບັນຊີລາຍຊື່ຜູ້ອອກແຮງງານ ທີ່ຂຶ້ນທະບຽນປະກັນສັງຄົມ ຂອງຜູ້ໃຊ້ແຮງງານຕາມແບບພິມທີ່ໄດ້ກໍານົດໄວ້;

3. ສໍາເນົາທະບຽນວິສາຫະກິດ, ທະບຽນອາກອນ ຫຼື ເອກະສານອະນຸຍາດເຄື່ອນໄຫວທຸລະກິດ;

4. ເອກະສານຢັ້ງຢືນຕ່າງໆ ຕາມແບບພິມທີ່ໄດ້ກໍານົດໄວ້.

### ມາດຕາ 92 (ປັບປຸງ) ການຍື່ນເອກະສານຂຶ້ນທະບຽນ ແລະ ການອອກບັດປະກັນສັງຄົມ

ການຍື່ນເອກະສານຂຶ້ນທະບຽນ ແລະ ການອອກບັດປະກັນສັງຄົມໃຫ້ປະຕິບັດ ດັ່ງນີ້:

1. ການຈັດຕັ້ງ ຫຼື ຜູ້ໃຊ້ແຮງງານ ຕ້ອງຍື່ນເອກະສານຂຶ້ນທະບຽນປະກັນສັງຄົມ ຂອງພະນັກງານ-ລັດຖະກອນ, ຜູ້ອອກແຮງງານ ຕໍ່ອົງການປະກັນສັງຄົມແຫ່ງຊາດ ຕາມການແບ່ງຂັ້ນຄຸ້ມຄອງພາຍໃນເວລາສາມສິບວັນ ນັບແຕ່ວັນໄດ້ບັນຈຸເຂົ້າເປັນພະນັກງານ-ລັດຖະກອນ ຫຼື ນັບແຕ່ວັນໄດ້ເຊັນສັນຍາແຮງງານເປັນຕົ້ນໄປ;

2. ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ ໃຫ້ຍື່ນເອກະສານຂຶ້ນທະບຽນປະກັນສັງຄົມ ຕໍ່ອົງການປະກັນສັງຄົມແຫ່ງຊາດ ຕາມການແບ່ງຂັ້ນຄຸ້ມຄອງ ໃນໄລຍະເວລາທີ່ສົມຄວນ;

3. ຜູ້ຮັບອຸດໜູນບໍານານ, ຜູ້ຮັບອຸດໜູນເສຍອົງຄະຈາກກໍາລັງປະກອບອາວຸດ ແລະ ຜູ້ຮັບອຸດໜູນຜູ້ດູແລ ໃຫ້ຍື່ນເອກະສານການຂຶ້ນທະບຽນ ພາຍຫຼັງໄດ້ຮັບຂໍ້ຕົກລົງການເຂົ້າຮັບອຸດໜູນດັ່ງກ່າວ;

4. ກໍລະນີໃບຢັ້ງຢືນການຂຶ້ນທະບຽນປະກັນສັງຄົມ ຫຼື ບັດປະກັນສັງຄົມ ຫາກສູນຫາຍ, ຖືກທຳລາຍຫຼື ເປ່ເພ ກໍສາມາດສະເໜີຕໍ່ອົງການປະກັນສັງຄົມແຫ່ງຊາດ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອຂໍອອກໃບຢັ້ງຢືນ ຫຼື ບັດປະກັນສັງຄົມໃໝ່.

ພາຍຫຼັງຍື່ນເອກະສານຂຶ້ນທະບຽນແລ້ວ ອົງການປະກັນສັງຄົມແຫ່ງຊາດ ຕ້ອງພິຈາລະນາການຂຶ້ນທະບຽນ, ອອກໃບຢັ້ງຢືນການຂຶ້ນທະບຽນໃຫ້ຫົວໜ່ວຍແຮງງານ ແລະ ບັດປະກັນສັງຄົມໃຫ້ຜູ້ປະກັນຕົນພາຍໃນເວລາ ສາມສິບວັນ.

## ໝວດທີ 2
## ການສະສົມໄລຍະປະກັນຕົນ
## ແລະ ການພິຈາລະນາການອຸດໜູນປະກັນສັງຄົມ

### ມາດຕາ 93 (ໃໝ່) ການສະສົມໄລຍະປະກັນຕົນ

ຜູ້ປະກັນຕົນ ໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມ ໄດ້ປິ່ນປົວເຮັດວຽກໃໝ່, ອອກຈາກຫົວໜ່ວຍແຮງງານ ຫຼື ໄດ້ໂຈະການຈ່າຍເງິນສົມທົບຊົ່ວຄາວ ກໍສາມາດສືບຕໍ່ມອບເງິນສົມທົບ ເພື່ອສະສົມເງິນສົມທົບໄວ້ ສໍາລັບຜົນປະໂຫຍດໃນການໄດ້ຮັບການອຸດໜູນປະກັນສັງຄົມ.

ຜູ້ປະກັນຕົນ ຢູ່ໃນໄລຍະຮັບອຸດໜູນໄລຍະສັ້ນ ໃຫ້ນັບເຂົ້າເປັນໄລຍະປະກັນຕົນ, ສ່ວນຜູ້ຢູ່ໃນໄລຍະທີ່ຮັບອຸດໜູນໄລຍະຍາວ ຫຼື ຮັບອຸດໜູນວ່າງງານ ຈະບໍ່ນັບເຂົ້າເປັນໄລຍະປະກັນຕົນ.

ຜູ້ປະກັນຕົນຄົບເງື່ອນໄຂ ແຕ່ຍັງສືບຕໍ່ເຮັດວຽກ ແລະ ມອບເງິນສົມທົບນັ້ນ ໃຫ້ເພີ່ມເງິນອຸດໜູນບໍານານຕາມອາຍຸກະສຽນທີ່ເກີນ ໜຶ່ງປີໃດ ໄດ້ຮັບ ໜຶ່ງ ສ່ວນຮ້ອຍ (1%) ແຕ່ທັງໝົດບໍ່ໃຫ້ເກີນອັດຕາສ່ວນ ສູງສຸດຂອງເງິນອຸດໜູນບໍານານ ທີ່ໄດ້ກໍານົດໄວ້.

ຜູ້ປະກັນຕົນ ທີ່ໄດ້ມອບເງິນສົມທົບຢູ່ຫຼາຍບ່ອນ ຫຼື ຜູ້ປະກັນຕົນທີ່ໄດ້ຍົກຍ້າຍຈາກການຈັດຕັ້ງຂອງລັດໄປຫົວໜ່ວຍແຮງງານ ຫຼື ຫົວໜ່ວຍແຮງງານມາການຈັດຕັ້ງຂອງລັດ ຊຶ່ງໄດ້ສະສົມເງິນສົມທົບ, ປີການ ຫຼື ປີປະກັນຕົນ ແລະ ຍັງບໍ່ໄດ້ຮັບເງິນອຸດໜູນເທື່ອດຽວມາກ່ອນ ກໍໃຫ້ສະສົມປີການ ຫຼື ປີປະກັນຕົນເພື່ອຮັບການອຸດໜູນປະກັນສັງຄົມ ຕາມພາກລັດ ຫຼື ພາກວິສາຫະກິດ ແລະ ຜູ້ສະໝັກໃຈ ເທົ່ານັ້ນ.

### ມາດຕາ 94 (ປັບປຸງ) ການຮ້ອງຂໍຮັບການອຸດໜູນປະກັນສັງຄົມ

ກ. ການຮ້ອງຂໍຮັບການອຸດໜູນປະກັນສັງຄົມ ໃຫ້ປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີ ຫຼື ແບບພິມ ຂໍຮັບເງິນອຸດໜູນປະກັນສັງຄົມ;
2. ສໍາເນົາບັດປະກັນສັງຄົມ;
3. ເອກະສານຢັ້ງຢືນການອຸດໜູນປະກັນສັງຄົມ ຂອງແຕ່ລະປະເພດ;
4. ເອກະສານອື່ນທີ່ກ່ຽວຂ້ອງ.

ຂ. ໄລຍະການຂໍຮັບເງິນອຸດໜູນປະກັນສັງຄົມ ແຕ່ລະປະເພດ ມີ ດັ່ງນີ້:

1. ການຂໍຮັບເງິນອຸດໜູນໄລຍະສັ້ນ ໃຫ້ປະກອບເອກະສານ ສົ່ງໃຫ້ອົງການປະກັນສັງຄົມແຫ່ງຊາດ ຕາມການແບ່ງຂັ້ນຄຸ້ມຄອງ ພາຍໃນເວລາ ເກົ້າສິບວັນ, ໃນກໍລະນີຈໍາເປັນ ກໍສາມາດພິຈາລະນາເປັນແຕ່ລະກໍລະນີ ໂດຍບໍ່ໃຫ້ຈ່າຍເງິນອຸດໜູນອື່ນຊໍ້າຊ້ອນກັນ;

2. ການຂໍຮັບເງິນອຸດໜູນໄລຍະຍາວ ໃຫ້ປະກອບເອກະສານ ສົ່ງໃຫ້ອົງການປະກັນສັງຄົມແຫ່ງຊາດ ຕາມການແບ່ງຂັ້ນຄຸ້ມຄອງ ພາຍໃນເວລາ ໜຶ່ງຮ້ອຍແປດສິບວັນ, ຖ້າຫາກກາຍກໍານົດ ກໍຈະພິຈາລະນາ ນັບແຕ່ວັນຍື່ນເອກະສານຂໍຮັບເງິນອຸດໜູນນັ້ນ ເປັນຕົ້ນໄປ.

ຜູ້ມີສິດໄດ້ຮັບເງິນອຸດໜູນປະກັນສັງຄົມ ແມ່ນ ຜູ້ປະກັນຕົນ, ຜົວ, ເມຍ ແລະ ລູກຂອງຜູ້ປະກັນຕົນ, ຜູ້ສືບທອດມູນມໍຣະດົກ ຫຼື ຜູ້ໄດ້ຮັບມອບສິດ ຊຶ່ງຈະຈ່າຍໃຫ້ເປັນບູລິມະສິດຕາມລໍາດັບ.

**ມາດຕາ 95 (ປັບປຸງ) ການພິຈາລະນາການອຸດໜູນປະກັນສັງຄົມ**

ການພິຈາລະນາການອຸດໜູນປະກັນສັງຄົມ ໃຫ້ປະຕິບັດ ດັ່ງນີ້:

1. ອົງການປະກັນສັງຄົມແຫ່ງຊາດ ຕ້ອງພິຈາລະນາການສະເໜີຂໍຮັບການອຸດໜູນປະກັນສັງຄົມພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບເອກະສານທີ່ຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ;

2. ການພິຈາລະນາເງິນອຸດໜູນໄລຍະສັ້ນ ສໍາລັບຜູ້ປະກັນຕົນທີ່ເຮັດວຽກຫຼາຍບ່ອນ ໃຫ້ບວກເງິນປະກັນຕົນເຂົ້າກັນ ແຕ່ບໍ່ເກີນເພດານສູງສຸດ ທີ່ໄດ້ກໍານົດໄວ້, ນອກຈາກນີ້ກໍຍັງສາມາດຮັບເງິນທົດແທນຈາກບ່ອນອື່ນອີກ;

ຜູ້ປະກັນຕົນ ແລະ ຜູ້ຮັບບໍານານ ທີ່ມີເງິນອຸດໜູນເສຍກໍາລັງແຮງງານ ສາມາດເລືອກເອົາແຕ່ເງິນໃດໜຶ່ງທີ່ຫຼາຍກວ່າ ເປັນຕົວຕັ້ງໃນການຄິດໄລ່ເງິນອຸດໜູນເສຍຊີວິດ.

3. ຜູ້ຮັບເງິນອຸດໜູນສະມາຊິກຄອບຄົວ ຫາກມີລາຍໄດ້ປົກກະຕິ ຫຼື ໄດ້ແຕ່ງດອງໃໝ່ ຈະຖືກຢຸດຈ່າຍເງິນອຸດໜູນດັ່ງກ່າວ;

ຖ້າວ່າຜູ້ເສຍກໍາລັງແຮງງານ ຫາກເສຍຊີວິດ ຜູ້ດູແລ ຈະໄດ້ຮັບເງິນອຸດໜູນດູແລເທື່ອດຽວເທົ່າກັບ ຫ້າເດືອນ ຂອງເງິນອຸດໜູນດູແລເປັນຈຸດເລີ່ມ, ຖ້າປີດູແລຫາກເກີນ ຫ້າປີ ກໍຈະໄດ້ຮັບເພີ່ມສອງປີໃດເທົ່າກັບ ໜຶ່ງເດືອນຂອງເງິນອຸດໜູນດູແລ ແລະ ຖືເປັນການສິ້ນສຸດການຮັບເງິນອຸດໜູນຜູ້ດູແລ ເປັນລາຍເດືອນ.

4. ຜູ້ອອກແຮງງານ ທີ່ຍັງບໍ່ທັນໄດ້ປະກັນຕົນໃຫ້ຫົວໜ່ວຍແຮງງານເປັນຜູ້ຮັບຜິດຊອບປະຕິບັດການອຸດໜູນປະກັນສັງຄົມ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້.

ສໍາລັບ ການອຸດໜູນເສຍອົງຄະ ແລະ ການອຸດໜູນຜູ້ດູແລ ຂອງຜູ້ເສຍອົງຄະຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VIII
## ຂໍ້ຫ້າມ

**ມາດຕາ 96 ຂໍ້ຫ້າມສໍາລັບພະນັກງານປະກັນສັງຄົມ**

ຫ້າມພະນັກງານປະກັນສັງຄົມ ມີພຶດຕິກໍາ ດັ່ງນີ້:

1. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ຂາດຈັນຍາບັນ, ລຳອຽງ, ໃຫ້ບໍລິການທີ່ບໍ່ມີຄຸນນະພາບ, ບໍ່ໄດ້ມາດຕະຖານ, ບໍ່ຖືກຕ້ອງຕາມກົດໝາຍ ຕໍ່ຜູ້ປະກັນຕົນ;

2. ສໍ້ໂກງ ຫຼື ຍັກຍອກເງິນອຸດໜູນປະກັນສັງຄົມປະເພດຕ່າງໆ, ປອມແປງເອກະສານ ຫຼື ໃຊ້ເອກະສານປອມ, ກົດໜ່ວງຖ່ວງດຶງ, ທຳລາຍ ຫຼື ເຮັດໃຫ້ເອກະສານກ່ຽວກັບການຮ້ອງຂໍຮັບການອຸດໜູນປະກັນສັງຄົມເສຍຫາຍ;

3. ສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ ແລະ ໜ້າທີ່ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ພັກພວກ, ໃຫ້, ທວງເອົາ ຫຼື ຮັບສິນບົນ ກ່ຽວກັບວຽກງານປະກັນສັງຄົມ;

4. ເປີດເຜີຍຄວາມລັບ ຂອງການຈັດຕັ້ງປະກັນສັງຄົມ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 97 ຂໍ້ຫ້າມສຳລັບຜູ້ປະກັນຕົນ ແລະ ສະມາຊິກຄອບຄົວ**

ຫ້າມຜູ້ປະກັນຕົນ ແລະ ສະມາຊິກຄອບຄົວ ມີພຶດຕິກຳ ດັ່ງນີ້:

1. ແຈ້ງຂໍ້ມູນທີ່ບໍ່ມີມູນຄວາມຈິງ;

2. ປອມແປງເອກະສານ ແລະ ໃຫ້ສິນບົນຕໍ່ພະນັກງານປະກັນສັງຄົມ;

3. ໂຄສະນາໃສ່ຮ້າຍປ້າຍສີ ພະນັກງານ ຫຼື ການຈັດຕັ້ງປະກັນສັງຄົມ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 98 ຂໍ້ຫ້າມສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກກີດຂວາງການປະຕິບັດວຽກງານຂອງພະນັກງານປະກັນສັງຄົມ;

2. ເປັນສື່ກາງໃຫ້ສິນບົນ ຫຼື ຮັບສິນບົນ ກ່ຽວກັບວຽກງານປະກັນສັງຄົມ;

3. ໂຄສະນາ, ເຜີຍແຜ່ ແລະ ສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງກ່ຽວກັບວຽກງານປະກັນສັງຄົມ;

4. ປົກປ້ອງ ແລະ ຊ່ວຍເຫຼືອ ພະນັກງານ-ລັດຖະກອນ, ຜູ້ອອກແຮງງານ ຫຼື ຜູ້ປະກັນຕົນທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປະກັນສັງຄົມ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ IX
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 99 (ປັບປຸງ) ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານປະກັນສັງຄົມ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ ຫຼື ການໄກ່ເກ່ຍ;

2. ການແກ້ໄຂ ທາງດ້ານບໍລິຫານ;

3. ການແກ້ໄຂ ໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ການຕັດສີນຂອງສານ;

5. ການແກ້ໄຂ ທີ່ມີລັກສະນະສາກົນ.

**ມາດຕາ 100 ການປະນີປະນອມ ຫຼື ການໄກ່ເກ່ຍ**

ໃນກໍລະນີ ມີຂໍ້ຂັດແຍ່ງກ່ຽວກັບວຽກງານປະກັນສັງຄົມ ຄູ່ກໍລະນີສາມາດແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ດ້ວຍການປຶກສາຫາລື, ເຈລະຈາ, ຕົກລົງກັນ ຫຼື ການໄກ່ເກ່ຍ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

**ມາດຕາ 101 (ປັບປຸງ) ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີ ມີຂໍ້ຂັດແຍ່ງກ່ຽວກັບວຽກງານປະກັນສັງຄົມ ຄູ່ກໍລະນີ ທີ່ໄດ້ຮັບຄວາມເສຍຫາຍມີ ສິດສະເໜີໃຫ້ອົງການຄຸ້ມຄອງວຽກງານປະກັນສັງຄົມ ພິຈາລະນາແກ້ໄຂຕາມກົດໝາຍ.

ໃນກໍລະນີ ມີຂໍ້ຂັດແຍ່ງ ລະຫວ່າງ ຜູ້ປະກັນຕົນ, ໂຮງໝໍ ແລະ ອົງການປະກັນສັງຄົມແຫ່ງຊາດ ກ່ຽວກັບການສະໜອງບໍລິການປິ່ນປົວສຸຂະພາບ ໃຫ້ສະເໜີຕໍ່ ຂະແໜງການສາທາລະນະສຸກ ເພື່ອພິຈາລະນາແກ້ ໄຂ.

**ມາດຕາ 102 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີ ມີຂໍ້ຂັດແຍ່ງກ່ຽວກັບວຽກງານປະກັນສັງຄົມ ຄູ່ກໍລະນີ ທີ່ໄດ້ຮັບຄວາມເສຍຫາຍ ມີສິດສະ ເໜີໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນຜູ້ພິຈາລະນາແກ້ໄຂ ຕາມກົດໝາຍ.

**ມາດຕາ 103 ການຕັດສີນຂອງສານ**

ໃນກໍລະນີ ມີຂໍ້ຂັດແຍ່ງກ່ຽວກັບວຽກງານປະກັນສັງຄົມ ຄູ່ກໍລະນີ ຝ່າຍໃດ ຝ່າຍໜຶ່ງ ສາມາດຮ້ອງ ຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສີນຕາມກົດໝາຍ.

**ມາດຕາ 104 (ໃໝ່) ການແກ້ໄຂທີ່ມີລັກສະນະສາກົນ**

ໃນກໍລະນີ ມີຂໍ້ຂັດແຍ່ງກ່ຽວກັບວຽກງານປະກັນສັງຄົມ ທີ່ມີລັກສະນະສາກົນ ໃຫ້ປະຕິບັດ ຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ X

## ການຄຸ້ມຄອງ ແລະການກວດກາວຽກງານປະກັນສັງຄົມ

### ໝວດທີ 1

### ການຄຸ້ມຄອງວຽກງານປະກັນສັງຄົມ

**ມາດຕາ 105 (ປັບປຸງ) ອົງການຄຸ້ມຄອງວຽກງານປະກັນສັງຄົມ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານປະກັນສັງຄົມ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານປະກັນສັງຄົມ ປະກອບດ້ວຍ:

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
2. ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ;
3. ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ເທດສະບານ, ນະຄອນ;

ໃນກໍລະນີຈໍາເປັນອາດມອບໃຫ້ໜ່ວຍງານວັດທະນາທໍາ-ສັງຄົມ ຂັ້ນບ້ານ ເປັນຜູ້ຄຸ້ມຄອງວຽກງານດັ່ງກ່າວ.

**ມາດຕາ 106 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ໃນການຄຸ້ມຄອງວຽກງານປະກັນສັງຄົມ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານປະກັນສັງຄົມ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານປະກັນສັງຄົມ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປະກັນສັງຄົມ ໃນຂອບເຂດທົ່ວປະເທດ;
4. ຕິດຕາມ ແລະ ຄຸ້ມຄອງ ລາຍຮັບ-ລາຍຈ່າຍ ຂອງກອງທຶນປະກັນສັງຄົມ;
5. ຊີ້ນໍາ, ຕິດຕາມ, ກວດກາ ແລະ ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານປະກັນສັງຄົມ ເປັນຕົ້ນ ການຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ກວມເອົາກຸ່ມເປົ້າໝາຍຕ່າງໆ ຢ່າງກວ້າງຂວາງ;
6. ພິຈາລະນາ ແລະ ຮັບຮອງ ເພດານເງິນປະກັນຕົນ, ລະດັບການອຸດໜູນ ແລະ ການຈັດແບ່ງອັດຕາສ່ວນ ຂອງແຕ່ລະກອງທຶນອຸດໜູນປະກັນສັງຄົມ ໃຫ້ສອດຄ່ອງກັບຄວາມຕ້ອງການ ໃນແຕ່ລະໄລຍະ;
7. ຄົ້ນຄວ້າ, ນໍາສະເໜີລັດຖະບານ ເພື່ອຮັບຮອງເອົາການດັດແກ້ອັດຕາເງິນສົມທົບ;
8. ຄົ້ນຄວ້າ, ພິຈາລະນາຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບການກະທໍາ ຫຼື ການຕົກລົງບັນຫາທີ່ເປັນການລະເມີດກົດໝາຍ ກ່ຽວກັບວຽກງານປະກັນສັງຄົມ;
9. ຄົ້ນຄວ້າ ແລະ ສະເໜີມາດຕະການ, ວິທີການແກ້ໄຂການກະທໍາ ທີ່ລະເມີດກົດໝາຍ ໃນການປະຕິບັດວຽກງານປະກັນສັງຄົມໃຫ້ມີຄວາມໂປ່ງໃສ ແລະ ສອດຄ່ອງກັບກົດໝາຍ;

10. ຄົ້ນຄວ້າ ແລະ ສະເໜີແຕ່ງຕັ້ງສະພາບໍລິຫານ ເພື່ອໃຫ້ລັດຖະບານພິຈາລະນາ;

11. ຄົ້ນຄ້ວາ ແລະ ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ອຳນວຍການອົງການປະກັນສັງຄົມແຫ່ງຊາດ;

12. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງພະນັກງານ ຂອງອົງການປະກັນສັງຄົມແຫ່ງຊາດ;

13. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປະກັນສັງຄົມ;

14. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານປະກັນສັງຄົມ ຕໍ່ລັດຖະບານຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 107 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານປະກັນສັງຄົມ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານປະກັນສັງຄົມ ລວມທັງໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມວຽກງານດັ່ງກ່າວ;

2. ຕິດຕາມ ແລະ ປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປະກັນສັງຄົມ;

3. ຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບການກະທຳ ຫຼື ການຕົກລົງບັນຫາທີ່ເປັນການລະເມີດກົດໝາຍ ກ່ຽວກັບວຽກງານປະກັນສັງຄົມ;

4. ຄົ້ນຄວ້າ ແລະ ສະເໜີມາດຕະການ, ວິທີການແກ້ໄຂການກະທຳ ທີ່ລະເມີດກົດໝາຍ ໃນການປະຕິບັດວຽກງານປະກັນສັງຄົມ ໃຫ້ມີຄວາມໂປ່ງໃສ, ສອດຄ່ອງກັບກົດໝາຍ;

5. ຊຸກຍູ້ ແລະ ຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ກວມເອົາກຸ່ມເປົ້າໝາຍຕ່າງໆ ຢ່າງກວ້າງຂວາງ;

6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານປະກັນສັງຄົມ ຕາມການມອບໝາຍຂອງຂັ້ນເທິງ;

7. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານປະກັນສັງຄົມ ຕໍ່ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 108 (ປັບປຸງ) ສິດ ແລະໜ້າທີ່ ຂອງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານປະກັນສັງຄົມ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍກ່ຽວກັບວຽກງານປະກັນສັງຄົມ ລວມທັງໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມວຽກງານດັ່ງກ່າວ;

2. ຄົ້ນຄວ້າ, ພິຈາລະນາຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບການກະທໍາ ຫຼື ການຕົກລົງບັນຫາທີ່ເປັນການລະເມີດກົດໝາຍ ກ່ຽວກັບວຽກງານປະກັນສັງຄົມ;

3. ຄົ້ນຄວ້າ ແລະ ສະເໜີມາດຕະການ, ວິທີການແກ້ໄຂການກະທໍາ ທີ່ລະເມີດກົດໝາຍ ໃນການປະຕິບັດວຽກງານປະກັນສັງຄົມໃຫ້ມີຄວາມໂປ່ງໃສ ແລະ ສອດຄ່ອງກັບກົດໝາຍ;

4. ຊຸກຍູ້ການຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ກວມກຸ່ມເປົ້າໝາຍຕ່າງໆ ຢ່າງກວ້າງຂວາງ;

5. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານປະກັນສັງຄົມ ຕໍ່ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 109 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານປະກັນສັງຄົມ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານປະກັນສັງຄົມ

**ມາດຕາ 110 (ປັບປຸງ) ອົງການກວດກາວຽກງານປະກັນສັງຄົມ**

ອົງການກວດກາວຽກງານປະກັນສັງຄົມ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານປະກັນສັງຄົມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 105 ຂອງກົດໝາຍສະບັບນີ້.

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດແຕ່ລະຂັ້ນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ.

**ມາດຕາ 111 (ປັບປຸງ) ເນື້ອໃນການກວດກາວຽກງານປະກັນສັງຄົມ**

ການກວດກາວຽກງານປະກັນສັງຄົມ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ ກ່ຽວກັບວຽກງານປະກັນສັງຄົມ;
2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ພະນັກງານປະກັນສັງຄົມ;
3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານປະກັນສັງຄົມ.

**ມາດຕາ 112 ຮູບການການກວດກາວຽກງານປະກັນສັງຄົມ**

ການກວດກາວຽກງານປະກັນສັງຄົມ ມີຮູບການ ດັ່ງນີ້:

1. ການກວດກາຢ່າງເປັນລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາ ອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການກວດກາວຽກງານປະກັນສັງຄົມ ໃຫ້ປະຕິບັດຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ.

**ມາດຕາ 113 ການລາຍງານ ແລະ ການແກ້ໄຂຜົນຂອງການກວດກາ**

ຄະນະກວດກາ ຕ້ອງສ້າງບົດບັນທຶກການກວດກາ, ບົດລາຍງານ ພ້ອມທັງສະເໜີ ວິທີການແກ້ໄຂຕໍ່ການລະເມີດ ແລະ ລາຍງານຕໍ່ອົງການທີ່ມີອຳນາດພິຈາລະນາ ກ່ຽວກັບຜົນຂອງການກວດກາ.

ຄະນະກວດກາ ຕ້ອງມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບການສະຫຼຸບລາຍງານຜົນຂອງການກວດກາ ແລະ ຮັກສາຄວາມລັບດ້ານເອກະສານປະກັນສັງຄົມທີ່ໄດ້ກວດກາຢ່າງເຂັ້ມງວດ.

**ມາດຕາ 114 ສິດ ແລະ ພັນທະຂອງເປົ້າໝາຍຖືກກວດກາ**

ເປົ້າໝາຍຖືກກວດກາ ມີສິດ ແລະ ພັນທະ ດັ່ງນີ້:

1. ຮ້ອງຂໍໃຫ້ຄະນະກວດກາ ນຳສະເໜີຂໍ້ຕົກລົງ ກ່ຽວກັບການກວດກາ ແລະ ບັດອະນຸຍາດກວດກາ;

2. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບການກວດກາ ທີ່ບໍ່ຖືກຕ້ອງຕາມລະບຽບການ;

3. ອຳນວຍຄວາມສະດວກໃນການປະຕິບັດໜ້າທີ່ຂອງຄະນະກວດກາ, ສະໜອງເອກະສານ, ຂໍ້ມູນ, ພະຍານ ຫຼັກຖານ ແລະ ຕອບບັນຫາທີ່ພົວພັນເຖິງເນື້ອໃນການກວດກາ ຕາມການສະເໜີຂອງ ຄະນະກວດກາ;

4. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ XI
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 115 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ.

**ມາດຕາ 116 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ກ່ຽວກັບການປະກັນສັງຄົມຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 117 (ປັບປຸງ) ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ກ່ຽວກັບການປະກັນສັງຄົມ ເປັນຕົ້ນ ຂໍ້ຫ້າມ ທີ່ມີລັກສະນະເບົາ ແລະ ເປັນການລະເມີດເທື່ອທຳອິດ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ.

ສຳລັບ ຜູ້ໃຊ້ແຮງງານທີ່ບໍ່ປະຕິບັດພັນທະ ຕາມກົດໝາຍສະບັບນີ້ ເປັນຕົ້ນ ບໍ່ເຂົ້າຮ່ວມ ແລະ ບໍ່ມອບເງິນສົມທົບ ຫຼື ຜູ້ເຂົ້າຮ່ວມລະບົບແລ້ວແຕ່ຢຸດມອບເງິນສົມທົບຈະຖືກກ່າວເຕືອນ ພ້ອມທັງເຮັດບົດບັນທຶກເປັນລາຍລັກອັກສອນ ແລະ ແນະນຳໃຫ້ ເຂົ້າປະກັນສັງຄົມ ຫຼື ມອບເງິນສົມທົບ ພາຍໃນເວລາ ເກົ້າສິບວັນ.

**ມາດຕາ 118 (ປັບປຸງ) ມາດຕະການທາງວິໄນ**

ພະນັກງານ-ລັດຖະກອນ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ, ຂາດຄວາມຮັບຜິດຊອບຂອງຕົນ ທີ່ໄດ້ຮັບມອບໝາຍ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

ສຳລັບພະນັກງານຂອງອົງການປະກັນສັງຄົມແຫ່ງຊາດ ໃຫ້ປະຕິບັດຕາມກົດລະບຽບພາຍໃນຂອງອົງການປະກັນສັງຄົມແຫ່ງຊາດ.

**ມາດຕາ 119 (ປັບປຸງ) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝເທົ່າຕົວ ຂອງມູນຄ່າຄວາມເສຍຫາຍທັງໝົດ.

ສຳລັບ ຜູ້ໃຊ້ແຮງງານ ທີ່ບໍ່ປະຕິບັດຕາມ ການແຈ້ງເຕືອນ, ບົດບັນທຶກເປັນລາຍລັກອັກສອນ ແລະ ກຳນົດເວລາ ທີ່ໄດ້ກຳນົດໄວ້ໃນມາດຕາ 117 ວັກ 2 ຂອງກົດໝາຍສະບັບນີ້ ຈະຖືກປັບໃໝເທົ່າກັບເງິນສົມທົບ ສ່ວນຂອງຜູ້ໃຊ້ແຮງງານ ທີ່ຕ້ອງຈ່າຍສົມທົບເຂົ້າກອງທຶນປະກັນສັງຄົມ ໃນແຕ່ລະເດືອນ.

**ມາດຕາ 120 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ອັນເນື່ອງມາຈາກວຽກງານປະກັນສັງຄົມ ຈະຕ້ອງໄດ້ໃຊ້ແທນຄ່າເສຍຫາຍທາງແພ່ງ ຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 121 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ທີ່ໄດ້ລະເມີດກົດໝາຍ ກ່ຽວກັບການປະກັນສັງຄົມ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 122 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 123 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບເລກທີ 34/ສພຊ, ລົງວັນທີ 26 ກໍລະກົດ 2013.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້